ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 236 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 18.12.2008.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ**

**ແລະ ນອກສັນຍາ ( ສະບັບປັບປຸງ )**

~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 221/ສພຊ, ລົງວັນທີ 8 ທັນວາ 2008 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ( ສະບັບປັບປຸງ );
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 37/ຄປຈ, ລົງວັນທີ 16 ທັນວາ 2008.

***ປະທານປະເທດ***

***ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :***

***<u>ມາດຕາ 1</u>*** : ປະກາດໃຊ້ກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ (ສະບັບປັບປຸງ).

***<u>ມາດຕາ 2</u>*** : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ.**

ຈູມມາລີ ໄຊຍະສອນ
~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 221 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ
## ກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະນອກສັນຍາ(ສະບັບປັບປຸງ)

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະນອກສັນຍາ (ສະບັບປັບປຸງ) ໃນວາລະປະຊຸມຕອນເຊົ້າຂອງວັນທີ 8 ທັນວາ 2008,

## ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 8 ທັນວາ 2008

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 01 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 8 ທັນວາ 2008

# ກົດໝາຍ
# ວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1(ໃໝ່). ຈຸດປະສົງ**

ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຮັດ ແລະ ປະຕິບັດສັນຍາ, ຄວາມຮັບຜິດຊອບ ທີ່ເນື່ອງຈາກການລະເມີດສັນຍາ ແລະ ການກໍ່ຄວາມເສັຍຫາຍ ທີ່ເກີດຂຶ້ນນອກສັນຍາ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງຄູ່ສັນຍາ, ຜູ້ຖືກເສັຍຫາຍ ແລະ ຜູ້ກໍ່ຄວາມເສັຍຫາຍ, ຮັບປະກັນຄວາມຖືກຕ້ອງຕາມລະບຽບກົດໝາຍ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳໃນສັງຄົມ ເພື່ອປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ.

**ມາດຕາ 2(ໃໝ່). ຂໍ້ຜູກພັນໃນສັນຍາ ແລະ ຂໍ້ຜູກພັນນອກສັນຍາ**

ຂໍ້ຜູກພັນໃນສັນຍາ ແມ່ນ ສາຍພົວພັນທາງດ້ານກົດໝາຍ ທີ່ເກີດຂຶ້ນຈາກສັນຍາ ຊຶ່ງພາໃຫ້ຄູ່ສັນຍາ ມີສິດ ແລະ ພັນທະທາງແພ່ງ ທີ່ຕ້ອງປະຕິບັດຕໍ່ກັນ.

ຂໍ້ຜູກພັນນອກສັນຍາ ແມ່ນ ສາຍພົວພັນທາງດ້ານກົດໝາຍ ທີ່ເກີດຂຶ້ນ ໂດຍບໍ່ມີສັນຍານຳກັນ ຫລື ຈາກການກະທຳຂອງບຸກຄົນໃດໜຶ່ງ, ຂອງບຸກຄົນອື່ນ, ຂອງສັດ ຫລື ຈາກວັດຖຸສິ່ງຂອງທີ່ຢູ່ໃນການຄຸ້ມຄອງຂອງບຸກຄົນນັ້ນ.

ມາດຕາ 3(ໃໝ່). **ການອະທິບາຍຄໍາສັບ**

ຄໍາສັບຕ່າງໆ ທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ການຄໍ້າປະກັນ ໝາຍເຖິງ ການຮັບປະກັນການປະຕິບັດສັນຍາ ດ້ວຍສັງຫາລິມະຊັບ (ຊັບເຄື່ອນທີ່), ອະສັງຫາລິມະຊັບ (ຊັບຄົງທີ່), ບຸກຄົນ ຫລື ນິຕິບຸກຄົນ;
2. ການຊວດຈໍາ ໝາຍເຖິງ ການນໍາເອົາຊັບສິ່ງຂອງໃດໜຶ່ງ ໄປໄວ້ນໍາເຈົ້າໜີ້ ຫລື ບຸກຄົນອື່ນ ທີ່ມີສິດກ່ຽວຂ້ອງ ເພື່ອຮັບປະກັນການປະຕິບັດສັນຍາ;
3. ການຊື້ຂາຍເປັນເງິນຜ່ອນ ໝາຍເຖິງ ການຊື້ຂາຍ ດ້ວຍການຈ່າຍເງິນເປັນງວດ ຕາມການຕົກລົງຂອງຄູ່ສັນຍາ;
4. ການມອບຊັບ ໝາຍເຖິງ ການເອົາຊັບຂອງຕົນ ໃຫ້ບຸກຄົນອື່ນ ໂດຍບໍ່ມີເງື່ອນໄຂໃນເວລາຍັງມີຊີວິດຢູ່;
5. ການຍົກຊັບ ໝາຍເຖິງ ການເອົາຊັບຂອງຕົນ ໃຫ້ບຸກຄົນອື່ນ ໂດຍມີເງື່ອນໄຂໃນເວລາຍັງມີຊີວິດຢູ່;
6. ການນໍາໃຊ້ສິດເກີນຄວນ ໝາຍເຖິງ ການນໍາໃຊ້ສິດເກີນຂອບເຂດທີ່ກົດໝາຍໄດ້ກໍານົດໄວ້ ຊຶ່ງກໍ່ຄວາມເສັຍຫາຍໃຫ້ແກ່ ຜູ້ໃດໜຶ່ງ;
7. ການປະຕິບັດໜ້າທີ່ ໝາຍເຖິງ ການເຄື່ອນໄຫວວຽກງານ ໃນຂອບເຂດສິດ ແລະ ໜ້າທີ່ ທີ່ໄດ້ຮັບມອບໝາຍ, ຖືກຕ້ອງຕາມຫລັກວິຊາການ ແລະ ຫລັກຈັນຍາບັນ;
8. ຄ່າເສັຍຫາຍ ໝາຍເຖິງ ຈໍານວນເງິນ ຫລື ວັດຖຸສິ່ງຂອງ ຂອງຜູ້ຮັບຜິດຊອບ ເພື່ອໃຊ້ແທນ ຄວາມເສັຍຫາຍທີ່ເກີດຂຶ້ນແກ່ຜູ້ອື່ນ;
9. ຄ່າປ່ວຍການ ໝາຍເຖິງ ຈໍານວນເງິນ ຫລື ວັດຖຸສິ່ງຂອງ ຂອງຜູ້ຮັບຜິດຊອບ ເພື່ອທົດແທນລາຍໄດ້ຂອງຜູ້ຖືກເສັຍຫາຍ ທີ່ຄວນຈະໄດ້ຮັບຈາກວຽກງານ ຫລື ເວລາທີ່ເສັຍໄປ;
10. ຄ່າປ່ວຍການຊັບ ໝາຍເຖິງ ຈໍານວນເງິນຂອງລູກໜີ້ ທີ່ທົດແທນຄ່າເສັຍຫາຍໃຫ້ເຈົ້າໜີ້ ຊຶ່ງຄວນໄດ້ຮັບ ຍ້ອນລູກໜີ້ບໍ່ປະຕິບັດພັນທະຂອງຕົນ;
11. ເຈົ້າໜີ້ ໝາຍເຖິງ ຜູ້ມີສິດທວງໃຫ້ລູກໜີ້ປະຕິບັດພັນທະໃດໜຶ່ງ;
12. ລູກໜີ້ ໝາຍເຖິງ ຜູ້ມີພັນທະປະຕິບັດສິ່ງໃດໜຶ່ງ ເຊັ່ນ: ມອບຊັບສິ່ງຂອງ, ປະຕິບັດວຽກງານ, ຈ່າຍເງິນ ແລະ ອື່ນໆ ຫລື ບໍ່ປະຕິບັດສິ່ງໃດໜຶ່ງ ເພື່ອຜົນປະໂຫຍດຂອງເຈົ້າໜີ້;
13. ສະພາວະທີ່ຈໍາເປັນ ໝາຍເຖິງ ການກະທໍາດ້ວຍຄວາມຈໍາເປັນຂອງບຸກຄົນໃດໜຶ່ງ ຊຶ່ງບໍ່ສາມາດນໍາໃຊ້ວິທີອື່ນ ເພື່ອຫລີກເວັ້ນໄພອັນຕະລາຍທີ່ຂົ່ມຂູ່ຜົນປະໂຫຍດຂອງລັດ ຫລື ຂອງບຸກຄົນອື່ນ ແຕ່ຜົນເສັຍຫາຍທີ່ເກີດຈາກການກະທໍານັ້ນ ຕ້ອງມີມູນຄ່າໜ້ອຍກວ່າ ຜົນເສັຍຫາຍທີ່ຈະເກີດຂຶ້ນຈາກໄພອັນຕະລາຍດັ່ງກ່າວ;
14. ສັນຍາທີ່ເປັນໂມຄະ ໝາຍເຖິງ ສັນຍາທີ່ບໍ່ມີຜົນບັງຄັບໃຊ້ທາງດ້ານກົດໝາຍ;

15. ບຸກຄົນອື່ນ ທີ່ຢູ່ໃນການຄຸ້ມຄອງຂອງບຸກຄົນໃດໜຶ່ງ ໝາຍເຖິງ ຜູ້ຮັບໃຊ້ວຽກ, ເດັກທີ່ບໍ່ທັນເຖິງກະສຽນອາຍຸ, ຄົນບ້າເສຍຈິດ ຫລື ນັກຮຽນ;
16. ຜູ້ໃຊ້ວຽກ ໝາຍເຖິງ ຜູ້ທີ່ໃຊ້ໃຫ້ບຸກຄົນໃດໜຶ່ງ ຊຶ່ງຢູ່ໃນການຄຸ້ມຄອງຂອງຕົນ ປະຕິບັດວຽກງານຕາມຄຳສັ່ງ ຫລື ຄຳແນະນຳ ຂອງຕົນ;
17. ເຫດສຸດວິໄສ ໝາຍເຖິງ ເຫດການທີ່ບໍ່ສາມາດຄາດຄະເນ ແລະ ຄວບຄຸມໄດ້ ເຊັ່ນ: ນ້ຳຖ້ວມ, ຟ້າຜ່າ, ແຜ່ນດິນໄຫວ ຊຶ່ງພາໃຫ້ລູກໜີ້ ບໍ່ສາມາດປະຕິບັດພັນທະຂອງຕົນໄດ້;
18. ເຫດບັງເອີນ ໝາຍເຖິງ ເຫດການທີ່ເກີດຂຶ້ນກະທັນຫັນໂດຍບໍ່ໄດ້ຄາດຄິດມາກ່ອນ ເຊັ່ນ: ການເຈັບເປັນກະທັນຫັນ ແລະ ຮ້າຍແຮງ, ອຸປະຕິເຫດ ຊຶ່ງພາໃຫ້ລູກໜີ້ ບໍ່ສາມາດປະຕິບັດພັນທະຂອງຕົນໄດ້.

**ມາດຕາ 4(ໃໝ່). ນະໂຍບາຍຂອງລັດກ່ຽວກັບຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ**

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ບຸກຄົນ ແລະ ນິຕິບຸກຄົນ ມີການພົວພັນກັນ ໃນດ້ານຕ່າງໆ ເຊັ່ນ: ຊື້–ຂາຍ, ກູ້ຢືມ, ຮັບເໝົາກໍ່ສ້າງ ດ້ວຍການເຮັດສັນຍາເປັນລາຍລັກອັກສອນ ເພື່ອຮັບປະກັນໃຫ້ສັນຍານັ້ນ ໄດ້ຮັບການປະຕິບັດ ຢ່າງຄົບຖ້ວນ, ຖືກຕ້ອງ, ເປັນທຳ, ດ້ວຍຄວາມຈິງໃຈ ແລະ ທັນເວລາ ລວມທັງ ຍົກສູງຄວາມຮັບຜິດຊອບຕໍ່ບຸກຄົນອື່ນ, ຕໍ່ສັດ ແລະ ຕໍ່ຊັບສິ່ງຂອງ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ເພື່ອບໍ່ໃຫ້ກໍ່ຄວາມເສຍຫາຍແກ່ຜູ້ອື່ນ.

**ມາດຕາ 5(ໃໝ່). ຫລັກການກ່ຽວກັບຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ**

ຂໍ້ຜູກພັນໃນສັນຍາ ໃຫ້ປະຕິບັດ ຕາມຫລັກການພື້ນຖານ ດັ່ງນີ້ :

1. ມີຄວາມສະໝັກໃຈ;
2. ມີຄວາມສະເໝີພາບ;
3. ມີຄວາມຊື່ສັດ, ການຮ່ວມມື ແລະ ມີຄວາມຈິງໃຈຕໍ່ກັນ;
4. ເຄົາລົບ ແລະ ປະຕິບັດ ຕາມລະບຽບກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດລາວ.

ຂໍ້ຜູກພັນນອກສັນຍາ ໃຫ້ປະຕິບັດ ຕາມຫລັກການພື້ນຖານ ດັ່ງນີ້:

1. ຜູ້ໃດກໍ່ຄວາມເສຍຫາຍ ແມ່ນ ຜູ້ນັ້ນເປັນຜູ້ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ໄດ້ເກີດຂຶ້ນ ຕາມລະບຽບກົດໝາຍ;
2. ການໃຊ້ແທນຄ່າເສຍຫາຍ ແມ່ນ ຂຶ້ນກັບລະດັບຄວາມເສຍຫາຍຕາມມູນຄ່າຕົວຈິງ ແລະ ປະຕິບັດຕາມສ່ວນຄວາມຮັບຜິດຊອບ ຂອງການກໍ່ຄວາມເສຍຫາຍ.

**ມາດຕາ 6(ໃໝ່). ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການເຮັດສັນຍາ, ການປະຕິບັດສັນຍາ, ຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເກີດຂຶ້ນແກ່ ລັດ, ລວມໝູ່, ບຸກຄົນ ຫລື ການຈັດຕັ້ງ ລວມທັງ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຢູ່ ສປປ ລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ.

**ມາດຕາ 7(ໃໝ່). ການຮ່ວມມືສາກົນ**

ລັດ ສົ່ງເສີມໃຫ້ມີການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການເຊັນ ແລະ ປະຕິບັດສັນຍາ, ການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ຍົກລະດັບຄວາມຮູ້ຄວາມສາມາດກ່ຽວກັບການເຮັດສັນຍາ, ການປະຕິບັດສັນຍາ ແລະ ການແກ້ໄຂຂໍ້ຂັດແຍ່ງ ທີ່ເນື່ອງຈາກການລະເມີດສັນຍາ ແລະ ການກໍ່ຄວາມເສັຍຫາຍ.

# ພາກທີ II

# ຂໍ້ຜູກພັນໃນສັນຍາ

## ໝວດທີ 1

## ຫລັກການລວມ

### ກ. ການເຮັດສັນຍາ

**ມາດຕາ 8(ປັບປຸງ). ສັນຍາ**

ສັນຍາ ແມ່ນ ການຕົກລົງລະຫວ່າງຄູ່ສັນຍາ ຊຶ່ງພາໃຫ້ສິດ ແລະ ພັນທະທາງແພ່ງ ເກີດຂຶ້ນ, ປ່ຽນແປງ ຫລື ສິ້ນສຸດລົງ.

ສັນຍາ ອາດຈະເຮັດຂຶ້ນ ລະຫວ່າງ:

– ອົງການຈັດຕັ້ງຂອງລັດ ຫລື ລວມໝູ່ ດ້ວຍກັນ;
– ອົງການຈັດຕັ້ງຂອງລັດ ຫລື ລວມໝູ່ ກັບ ນິຕິບຸກຄົນອື່ນ ຫລື ບຸກຄົນ;
– ນິຕິບຸກຄົນ ຫລື ບຸກຄົນ ດ້ວຍກັນ;
– ນິຕິບຸກຄົນ ກັບ ບຸກຄົນ.

**ມາດຕາ 9(ປັບປຸງ). ລັກສະນະຂອງສັນຍາ**

ສັນຍາ ອາດຈະມີລັກສະນະ ຝ່າຍດຽວ, ສອງຝ່າຍ ຫລື ຫລາຍຝ່າຍ.

ສັນຍາຝ່າຍດຽວ ແມ່ນ ການຕົກລົງ ທີ່ຝ່າຍດຽວມີພັນທະ ຊຶ່ງຕ້ອງປະຕິບັດຕໍ່ອີກຝ່າຍໜຶ່ງໂດຍບໍ່ມີການຕອບແທນຈາກຝ່າຍນີ້.

ສັນຍາສອງຝ່າຍ ຫລື ຫລາຍຝ່າຍ ແມ່ນ ການຕົກລົງຂອງສອງຝ່າຍ ຫລື ຫລາຍຝ່າຍທີ່ພາໃຫ້ເກີດສິດ ແລະ ພັນທະຕໍ່ກັນ.

ສັນຍາດັ່ງກ່າວ ແມ່ນ ສັນຍາທາງແພ່ງ ຊຶ່ງຈະກາຍເປັນສັນຍາການຄ້າ ຖ້າວ່າວັດຖຸປະສົງຂອງສັນຍາ ຫາກແມ່ນການເຄື່ອນໄຫວທຸລະກິດ.

**ມາດຕາ 10. ເງື່ອນໄຂຂອງສັນຍາ**

ສັນຍາ ຕ້ອງເຮັດຂຶ້ນໃຫ້ຄົບຖ້ວນຕາມເງື່ອນໄຂ ດັ່ງນີ້:

1. ຄວາມສະຫມັກໃຈຂອງຄູ່ສັນຍາ;
2. ຄວາມສາມາດທາງດ້ານການປະພຶດຂອງຄູ່ສັນຍາ;
3. ວັດຖຸປະສົງຂອງສັນຍາ ຕ້ອງໃຫ້ຊັດເຈນ, ມີຈິງ ແລະ ຖືກຕ້ອງຕາມກົດຫມາຍ;
4. ເຫດຜົນຂອງສັນຍາ ຕ້ອງໃຫ້ຖືກຕ້ອງຕາມກົດຫມາຍ.
5. ຮູບການຂອງສັນຍາ ຕ້ອງໃຫ້ສອດຄ່ອງກັບການກຳນົດຂອງກົດຫມາຍ.

**ມາດຕາ 11(ປັບປຸງ). ຄວາມສະຫມັກໃຈຂອງຄູ່ສັນຍາ**

ຄວາມສະຫມັກໃຈຂອງຄູ່ສັນຍາ ແມ່ນ ຄວາມລົມຍອມຂອງຄູ່ສັນຍາ ໃນການເຮັດສັນຍານຳກັນ ໂດຍປາສະຈາກ ຄວາມຫລົງຜິດ, ການຕົວະຍົວະຫລອກລວງ, ການບັງຄັບນາບຂູ່ ຫລື ການໃຊ້ຄວາມຮຸນແຮງ ຫລື ຄວາມອັບປະໂຫຍດຂອງຝ່າຍໃດຫນຶ່ງ.

ຄວາມຫລົງຜິດ ເກີດຂຶ້ນ ເມື່ອວັດຖຸປະສົງຂອງສັນຍາບໍ່ຖືກຕ້ອງ ຕາມທີ່ຄູ່ສັນຍາໄດ້ຕົກລົງກັນ.

ການຕົວະຍົວະຫລອກລວງ ເກີດຂຶ້ນ ເມື່ອຄູ່ສັນຍາຝ່າຍຫນຶ່ງ ໄດ້ໃຊ້ກົນອຸບາຍ ຊຶ່ງພາໃຫ້ອີກຝ່າຍຫນຶ່ງຫລົງເຊື່ອເຮັດສັນຍາ.

ການບັງຄັບນາບຂູ່ ຫລື ການໃຊ້ຄວາມຮຸນແຮງ ເກີດຂຶ້ນ ເມື່ອຄູ່ສັນຍາຝ່າຍໃດຫນຶ່ງຫາກເຮັດສັນຍາ ຍ້ອນຄວາມຢ້ານກົວຕໍ່ການກະທຳດັ່ງກ່າວ ຊຶ່ງເປັນອັນຕະລາຍແກ່ຕົນເອງ, ຄອບຄົວ, ຊັບສົມບັດ ຫລື ຍາດພີ່ນ້ອງຂອງຕົນ.

ຄວາມອັບປະໂຫຍດຂອງຝ່າຍໃດຫນຶ່ງ ເກີດຂຶ້ນ ເມື່ອຜົນປະໂຫຍດ ທີ່ເກີດຈາກສັນຍານັ້ນ ບໍ່ເປັນທຳ.

**ມາດຕາ 12(ປັບປຸງ). ຄວາມສາມາດທາງດ້ານການປະພຶດຂອງຄູ່ສັນຍາ**

ຄວາມສາມາດທາງດ້ານການປະພຶດ ແມ່ນ ຄວາມສາມາດດ້ວຍການກະທຳຂອງບຸກຄົນ ຫລື ການຈັດຕັ້ງ ທີ່ພາໃຫ້ເກີດສິດ ແລະ ພັນທະທາງແພ່ງແກ່ຕົນ.

ບຸກຄົນໃດຫນຶ່ງ ຈະຖືວ່າເປັນຜູ້ມີຄວາມສາມາດທາງດ້ານການປະພຶດໄດ້ ກໍຕໍ່ເມື່ອບຸກຄົນນັ້ນຫາກມີອາຍຸແຕ່ ສິບແປດປີ ຂຶ້ນໄປ ແລະ ບໍ່ເປັນຄົນບ້າເສັຍຈິດ.

ການຈັດຕັ້ງໃດໜຶ່ງ ຈະຖືວ່າມີຄວາມສາມາດທາງດ້ານການປະພຶດໄດ້ ກໍຕໍ່ເມື່ອການຈັດຕັ້ງນັ້ນ ຫາກໄດ້ຖືກຮັບຮອງເປັນນິຕິບຸກຄົນ.

**ມາດຕາ 13. ວັດຖຸປະສົງຂອງສັນຍາ**

ວັດຖຸປະສົງຂອງສັນຍາ ແມ່ນ ເປົ້າໝາຍທີ່ຄູ່ສັນຍາຕ້ອງການໃຫ້ມີຂຶ້ນ.

ວັດຖຸປະສົງ ຕ້ອງໃຫ້ຊັດເຈນ, ມີຈິງ, ຖືກຕ້ອງຕາມກົດໝາຍ ຫລື ບໍ່ຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສາມາດປະຕິບັດໄດ້.

**ມາດຕາ 14. ເຫດຜົນຂອງສັນຍາ**

ເຫດຜົນຂອງສັນຍາ ແມ່ນ ສິ່ງຊຸກຍູ້ໃຫ້ເຮັດສັນຍາ ແລະ ໃຫ້ຄູ່ສັນຍານັ້ນ ໄດ້ປະຕິບັດສິດ ແລະ ພັນທະຂອງຕົນ.

ເຫດຜົນຂອງສັນຍາ ຕ້ອງໃຫ້ມີຈິງ ແລະ ຖືກຕ້ອງຕາມກົດໝາຍ.

**ມາດຕາ 15(ປັບປຸງ). ຮູບການຂອງສັນຍາ**

ສັນຍາ ອາດຈະເຮັດເປັນລາຍລັກອັກສອນ, ທາງປາກເປົ່າ ຫລື ດ້ວຍຮູບການອື່ນ.

ສັນຍາທີ່ເຮັດຂຶ້ນຕາມມາດຕາ 8 ຂອງກົດໝາຍສະບັບນີ້ ຕ້ອງເຮັດເປັນລາຍລັກອັກສອນ ເວັ້ນເສັຽແຕ່ສັນຍາທີ່ເຮັດຂຶ້ນ ລະຫວ່າງ ບຸກຄົນດ້ວຍກັນ.

ສັນຍາທີ່ເຮັດເປັນລາຍລັກອັກສອນນັ້ນ ຕ້ອງລົງວັນທີ ເດືອນ ປີ ແລະ ມີລາຍເຊັນຂອງຄູ່ສັນຍາ. ເພື່ອຢັ້ງຢືນຄວາມແນ່ນອນ ຄູ່ສັນຍາອາດຈະແປະໂປ້ມືຂອງຕົນໃສ່ຕື່ມອີກກໍໄດ້.

ສັນຍາທີ່ເຮັດເປັນລາຍລັກອັກສອນ ອາດຈະຂຽນດ້ວຍມື, ພິມດີດ ຫລື ພິມດ້ວຍເຄື່ອງເອເລັກໂຕຣນິກ ໂດຍຄູ່ສັນຍາເອງ ຫລື ມີການເຂົ້າຮ່ວມຂອງນາຍບ້ານ ພ້ອມດ້ວຍພະຍານທັງສອງຝ່າຍທີ່ເຊື່ອຖືໄດ້ ຢ່າງໜ້ອຍ ສາມຄົນ.

ເພື່ອຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍ ແລະ ຄວາມເປັນຈິງຂອງສັນຍາ ໃຫ້ນຳສັນຍານັ້ນ ໄປຢັ້ງຢືນ ຢູ່ສຳນັກງານທະບຽນສານ.

**ມາດຕາ 16(ປັບປຸງ). ເນື້ອໃນຂອງສັນຍາ**

ສັນຍາ ອາດຈະປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

- ຊື່, ນາມສະກຸນ ແລະ ບ່ອນຢູ່ ຂອງຄູ່ສັນຍາ;
- ວັດຖຸປະສົງ, ລາຄາ, ກຳນົດເວລາປະຕິບັດ, ການຊຳລະ, ການນຳສົ່ງ;
- ຂອບເຂດ, ປະລິມານ ແລະ ຄຸນນະພາບ ຂອງເປົ້າໝາຍ;
- ສະຖານທີ່ຂອງການປະຕິບັດສັນຍາ ແລະ ພັນທະໃນການແຈ້ງໃຫ້ແກ່ກັນຊາບ;
- ຜົນສະທ້ອນຂອງການລະເມີດສັນຍາ;

- ຮູບການ ແລະ ວິທີການແກ້ໄຂຂໍ້ຂັດແຍ່ງ;
- ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດ ສັນຍາກ່ອນກຳນົດ.

ວັດຖຸປະສົງ, ລາຄາ, ກຳນົດເວລາປະຕິບັດ ແມ່ນ ເນື້ອໃນອັນຈຳເປັນສຳລັບສັນຍາທຸກປະເພດ.

**ມາດຕາ 17(ປັບປຸງ). ການສະເໜີ ແລະ ການຮັບຕອບ ສັນຍາ**

ໃນສັນຍາທາງປາກເປົ່າ ທີ່ຝ່າຍສະເໜີບໍ່ໄດ້ກຳນົດເວລາໃຫ້ຕອບຮັບນັ້ນ ເມື່ອຝ່າຍຖືກສະເໜີໄດ້ຮັບຄຳສະເໜີໃນເວລາໃດ, ຢູ່ບ່ອນໃດ ກໍສາມາດຕອບຮັບ ໃນເວລານັ້ນ, ຢູ່ບ່ອນນັ້ນໄດ້ ແລະ ກໍໃຫ້ຖືວ່າ ສັນຍານັ້ນ ໄດ້ມີການຕົກລົງກັນ ນັບແຕ່ເວລານັ້ນເປັນຕົ້ນໄປ.

ໃນສັນຍາເປັນລາຍລັກອັກສອນ ທີ່ຝ່າຍສະເໜີບໍ່ໄດ້ກຳນົດເວລາໃຫ້ຕອບຮັບນັ້ນ ຝ່າຍທີ່ໄດ້ຮັບຄຳສະເໜີ ຕ້ອງສົ່ງຄຳຕອບເຖິງຝ່າຍສະເໜີ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ.

ຖ້າວ່າຝ່າຍສະເໜີ ຫາກໄດ້ວາງກຳນົດເວລາໃຫ້ຕອບຮັບແລ້ວ ສັນຍາກໍຈະຖືວ່າໄດ້ມີການຕົກລົງກັນ ນັບແຕ່ເວລາຄຳຕອບຮັບນັ້ນ ໄດ້ມາເຖິງຝ່າຍສະເໜີ ພາຍໃນກຳນົດເວລາດັ່ງກ່າວ ແລະ ຝ່າຍສະເໜີ ກໍບໍ່ມີສິດຖອນຕົວໄດ້.

ຖ້າວ່າຄຳຕອບຮັບນັ້ນ ຫາກເຮັດຂຶ້ນພາຍໃນກຳນົດເວລາທີ່ສະເໜີ ແຕ່ຄຳຕອບຮັບ ຜັດໄດ້ມາເຖິງມືຝ່າຍສະເໜີຊ້າກວ່າກຳນົດເວລາດັ່ງກ່າວ ໃນກໍລະນີທີ່ຝ່າຍສະເໜີ ຫາກຮັບເອົາ ກໍໃຫ້ຖືວ່າສັນຍານັ້ນ ໄດ້ມີການຕົກລົງກັນ.

ຖ້າວ່າຄຳຕອບຮັບນັ້ນ ຫາກມີຂໍ້ຄວາມ ເພີ່ມເຕີມ, ຕັດອອກ ຫລື ປ່ຽນແປງ ເມື່ອຝ່າຍສະເໜີເບື້ອງຕົ້ນ ຫາກຕອບຮັບເຫັນດີນຳ ກໍໃຫ້ຖືວ່າ ສັນຍານັ້ນ ໄດ້ມີການຕົກລົງກັນ.

## ຂ. ສັນຍາທີ່ເປັນໂມຄະ

**ມາດຕາ 18. ສັນຍາທີ່ເປັນໂມຄະ**

ສັນຍາທີ່ເປັນໂມຄະ ແມ່ນ ສັນຍາທີ່ເຮັດຂຶ້ນ ໂດຍບໍ່ຖືກຕ້ອງຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງກົດໝາຍສະບັບນີ້.

ສັນຍາ ອາດຈະເປັນໂມຄະບໍ່ເດັດຂາດ ຫລື ເດັດຂາດ, ເປັນໂມຄະທັງໝົດ ຫລື ບາງສ່ວນ.

**ມາດຕາ 19(ປັບປຸງ). ສັນຍາທີ່ເປັນໂມຄະບໍ່ເດັດຂາດ**

ສັນຍາທີ່ເປັນໂມຄະບໍ່ເດັດຂາດ ແມ່ນ ສັນຍາເປັນໂມຄະ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດຂອງບຸກຄົນເທົ່ານັ້ນ.

ສັນຍາທີ່ເປັນໂມຄະບໍ່ເດັດຂາດ ມີ ຄື:

1. ສັນຍາທີ່ເຮັດຂຶ້ນດ້ວຍການຕົວະຍົວະຫລອກລວງ ຫລື ການບັງຄັບນາບຂູ່ ຫລື ເຮັດຂຶ້ນໂດຍຝ່າຍໜຶ່ງໄດ້ຮັບຄວາມອັບປະໂຫຍດ;
2. ສັນຍາທີ່ເຮັດຂຶ້ນໂດຍຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ;
3. ສັນຍາທີ່ເຮັດຂຶ້ນໂດຍບຸກຄົນທີ່ຂາດສະຕິສຳນຶກ ຫລື ຢູ່ໃນສະພາບມຶນເມົາອັນໜັກໜ່ວງ;
4. ສັນຍາທີ່ເຮັດຂຶ້ນໂດຍເຈດຕະນາບໍ່ດີຂອງຜູ້ຕາງໜ້າ;
5. ສັນຍາທີ່ເຮັດຂຶ້ນດ້ວຍຄວາມຈຳເປັນ ໃນສະພາບການອັນໜັກໜ່ວງເປັນພິເສດ.

ຖ້າວ່າສັນຍາທີ່ເປັນໂມຄະບໍ່ເດັດຂາດນັ້ນ ຫາກມີການເຫັນດີ ຫລື ຮັບຮອງເອົາຈາກຝ່າຍທີ່ເສຍສິດ ແລະ ຜົນປະໂຫຍດແລ້ວ ກໍຈະຖືວ່າເປັນສັນຍາທີ່ໃຊ້ໄດ້.

**ມາດຕາ 20(ປັບປຸງ). ສັນຍາທີ່ເປັນໂມຄະເດັດຂາດ**

ສັນຍາທີ່ເປັນໂມຄະເດັດຂາດ ແມ່ນ ສັນຍາເປັນໂມຄະ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດຂອງລັດ ຫລື ຂອງສັງຄົມ.

ສັນຍາທີ່ເປັນໂມຄະເດັດຂາດ ມີ ຄື:

1. ສັນຍາທີ່ເຮັດຂຶ້ນໂດຍຂັດກັບຜົນປະໂຫຍດຂອງລັດ ຫລື ຂອງສັງຄົມ;
2. ສັນຍາທີ່ເຮັດຂຶ້ນໂດຍນິຕິບຸກຄົນ ຊຶ່ງຂັດກັບກົດລະບຽບກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ;
3. ສັນຍາທີ່ເຮັດຂຶ້ນດ້ວຍການເຊື່ອງອຳ;
4. ສັນຍາທີ່ເຮັດຂຶ້ນດ້ວຍການລະເມີດຮູບການຂອງສັນຍາ.

ຄູ່ສັນຍາບໍ່ມີສິດຕົກລົງ ແລະ ຮັບຮອງເອົາສັນຍາທີ່ເປັນໂມຄະເດັດຂາດນັ້ນໄດ້ແຕ່ຢ່າງໃດ.

**ມາດຕາ 21(ປັບປຸງ). ສັນຍາທີ່ເປັນໂມຄະທັງໝົດ ຫລື ບາງສ່ວນ**

ສັນຍາທີ່ເປັນໂມຄະທັງໝົດ ແມ່ນ ສັນຍາ ທີ່ມີເນື້ອໃນໃຊ້ບໍ່ໄດ້ທັງໝົດ.

ສັນຍາທີ່ເປັນໂມຄະບາງສ່ວນ ແມ່ນ ສັນຍາ ທີ່ມີເນື້ອໃນບາງສ່ວນໃຊ້ໄດ້ ແລະ ບາງສ່ວນໃຊ້ບໍ່ໄດ້.

**ມາດຕາ 22. ການຂໍລົບລ້າງສັນຍາທີ່ເປັນໂມຄະ**

ສັນຍາທີ່ເປັນໂມຄະ ອາດຈະຂໍລົບລ້າງໄດ້.

ຖ້າວ່າຄູ່ສັນຍາຝ່າຍໃດ ຫາກໄດ້ຮູ້ວ່າ ສັນຍາທີ່ເຮັດຂຶ້ນນັ້ນເປັນໂມຄະແລ້ວ ຕ້ອງແຈ້ງໃຫ້ຄູ່ສັນຍາຂອງຕົນຊາບໃນທັນໃດ ເພື່ອທຳການລົບລ້າງສັນຍາດັ່ງກ່າວ, ໃນກໍລະນີທີ່ຄູ່ສັນຍາຝ່າຍນີ້ ຫາກບໍ່ເຫັນດີລົບລ້າງສັນຍານັ້ນແລ້ວ ກໍໃຫ້ຝ່າຍທີ່ແຈ້ງນັ້ນຍື່ນຄຳຮ້ອງຂໍຕໍ່ສານ ເພື່ອໃຫ້ລົບລ້າງສັນຍາ.

ພໍ່ແມ່ ຫລື ຜູ້ປົກຄອງ ຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ, ຄົນບ້າເສຍຈິດ ກໍມີສິດຂໍລົບລ້າງສັນຍາດັ່ງກ່າວ.

ເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ, ຄົນບ້າເສັຍຈິດ ມີສິດຂໍລົບລ້າງສັນຍາທີ່ຕົນໄດ້ເຮັດຂຶ້ນນັ້ນ ພາຍໃນກຳນົດ ສາມປີ ພາຍຫລັງທີ່ຕົນໄດ້ເຖິງກະສຽນອາຍຸ ຫລື ໄດ້ກັບຄືນມາເປັນຜູ້ມີຄວາມສາມາດທາງດ້ານການປະພຶດແລ້ວ.

ສຳລັບສັນຍາທີ່ເປັນໂມຄະບໍ່ເດັດຂາດນັ້ນ ມີແຕ່ຄູ່ສັນຍາເທົ່ານັ້ນທີ່ຈະຂໍລົບລ້າງໄດ້. ສ່ວນສັນຍາທີ່ເປັນໂມຄະເດັດຂາດນັ້ນ ທຸກຄົນທີ່ມີຜົນປະໂຫຍດກ່ຽວຂ້ອງ ກໍມີສິດຂໍລົບລ້າງໄດ້.

### ມາດຕາ 23. ຜົນສະທ້ອນຂອງສັນຍາທີ່ເປັນໂມຄະ

ເມື່ອຮັບຮູ້ວ່າສັນຍາເປັນໂມຄະແລ້ວ ໃຫ້ປະຕິບັດ ດັ່ງນີ້:

1. ໃຫ້ສິ່ງຊັບສິ່ງຂອງ ທີ່ໄດ້ປະຕິບັດຕໍ່ກັນແລ້ວນັ້ນຄືນແກ່ ຄູ່ສັນຍາທັງສອງຝ່າຍ ໃນກໍລະນີທີ່ສັນຍາຫາກໄດ້ເຮັດຂຶ້ນ ໂດຍບໍ່ສອດຄ່ອງກັບເງື່ອນໄຂຂອງສັນຍາ, ສັນຍາຂອງນິຕິບຸກຄົນຫາກໄດ້ເຮັດຂຶ້ນໂດຍຂັດກັບວັດຖຸປະສົງ ຫລື ເປົ້າຫມາຍການເຄື່ອນໄຫວຂອງຕົນ, ສັນຍາທີ່ໄດ້ເຮັດຂຶ້ນໂດຍເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫລື ຄົນບ້າເສັຍຈິດ, ສັນຍາທີ່ໄດ້ເຮັດຂຶ້ນໂດຍບຸກຄົນທີ່ຂາດສະຕິສຳນຶກ ຫລື ຢູ່ໃນສະພາບມຶນເມົາອັນຫນັກຫນ່ວງ, ສັນຍາທີ່ໄດ້ເຮັດຂຶ້ນໂດຍຝ່າຍຫນຶ່ງ ໄດ້ຮັບຄວາມອັບປະໂຫຍດ;
2. ໃຫ້ສິ່ງຊັບສິ່ງຂອງທີ່ໄດ້ປະຕິບັດແລ້ວນັ້ນ ຄືນແກ່ຝ່າຍທີ່ໄດ້ຮັບຄວາມເສັຍຫາຍ ໃນກໍລະນີທີ່ສັນຍາຫາກໄດ້ເຮັດຂຶ້ນດ້ວຍການຕົວະຍົວະຫລອກລວງ ຫລື ການບັງຄັບນາບຂູ່. ສ່ວນຊັບສິ່ງຂອງທີ່ໄດ້ປະຕິບັດຈາກອີກຝ່າຍຫນຶ່ງນັ້ນ ໃຫ້ຮິບເປັນຂອງລັດ;
3. ໃນກໍລະນີທີ່ສັນຍາຫາກໄດ້ເຮັດຂຶ້ນໂດຍຂັດກັບຄວາມຫມັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມນັ້ນ ກໍໃຫ້ຮິບຊັບສິ່ງຂອງທີ່ໄດ້ປະຕິບັດແລ້ວທັງຫມົດເປັນຂອງລັດ.

## ຂ. ການປະຕິບັດສັນຍາ

### ມາດຕາ 24(ປັບປຸງ). ການປະຕິບັດສັນຍາ

ຄູ່ສັນຍາ ຕ້ອງປະຕິບັດສັນຍາດ້ວຍຄວາມຈິງໃຈ, ຄົບຖ້ວນ, ຕາມກຳນົດເວລາ ແລະ ໃນສະຖານທີ່ ຊຶ່ງໄດ້ກຳນົດໄວ້ໃນສັນຍາ ຫລື ກົດຫມາຍ.

ຄູ່ສັນຍາ ບໍ່ມີສິດ ປະຕິເສດການປະຕິບັດສັນຍາ ຫລື ປ່ຽນແປງເງື່ອນໄຂຂອງສັນຍາແຕ່ຝ່າຍດຽວ ເວັ້ນເສັຍແຕ່ກໍລະນີທີ່ກົດຫມາຍຫາກໄດ້ອະນຸຍາດໃຫ້.

ຄູ່ສັນຍາ ມີສິດບໍ່ຮັບເອົາການປະຕິບັດ ທີ່ບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ແລະ ສອດຄ່ອງກັບສັນຍາ ຫລື ກົດຫມາຍ ເວັ້ນເສັຍແຕ່ ສັນຍາ ຫລື ກົດຫມາຍ ຫາກໄດ້ກຳນົດໄວ້ຢ່າງອື່ນ.

**ມາດຕາ 25(ໃໝ່). ການປະຕິບັດສັນຍາເພີ່ມເຕີມ**

ໃນກໍລະນີທີ່ສັນຍາ ຫາກບໍ່ໄດ້ກໍານົດ ຫລື ກໍານົດບໍ່ຈະແຈ້ງ ກ່ຽວກັບຄຸນນະພາບທີ່ຕ້ອງການນັ້ນ ໃຫ້ປະຕິບັດຢ່າງສອດຄ່ອງກັບກົດໝາຍວ່າດ້ວຍມາດຕະຖານ ຫລື ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຫລື ມາດຕະຖານທີ່ຍອມຮັບ ເປັນປະເພນີເຄີຍປະຕິບັດກັນມາ ໂດຍສອດຄ່ອງກັບວັດຖຸປະສົງຂອງສັນຍາ.

ໃນກໍລະນີທີ່ສັນຍາ ຫາກກໍານົດລາຄາ ຫລື ຄ່າຕອບແທນ ບໍ່ຈະແຈ້ງນັ້ນ ໃຫ້ປະຕິບັດຢ່າງສອດຄ່ອງກັບລາຄາທົ່ວໄປໃນທ້ອງຕະຫລາດ ຢູ່ສະຖານທີ່ ເວລາປະຕິບັດສັນຍາ ຫລື ຕາມລາຄາ ທີ່ລັດໄດ້ກໍານົດ.

**ມາດຕາ 26. ກໍານົດເວລາຂອງການປະຕິບັດສັນຍາ**

ສັນຍາ ຕ້ອງໄດ້ຮັບການປະຕິບັດ ຕາມກໍານົດເວລາທີ່ໄດ້ກໍານົດໄວ້ ແລະ ໃຫ້ສອດຄ່ອງກັບກົດໝາຍ.

ໃນກໍລະນີທີ່ບໍ່ໄດ້ກໍານົດເວລາຂອງການປະຕິບັດສັນຍາ ເຈົ້າໜີ້ ມີສິດທວງໃຫ້ປະຕິບັດ ແລະ ລູກໜີ້ ກໍມີສິດປະຕິບັດໄດ້ທຸກເວລາ. ໃນກໍລະນີທີ່ເຈົ້າໜີ້ ຫາກໄດ້ທວງໃຫ້ປະຕິບັດນັ້ນ ລູກໜີ້ ມີພັນທະປະຕິບັດສັນຍາດັ່ງກ່າວ ພາຍໃນກໍານົດເວລາ ສິບຫ້າວັນ ນັບແຕ່ວັນທີ່ເຈົ້າໜີ້ໄດ້ທວງໃຫ້ປະຕິບັດເປັນຕົ້ນໄປ.

ລູກໜີ້ ອາດຈະປະຕິບັດສັນຍາ ກ່ອນກໍານົດເວລາກໍໄດ້ ຖ້າວ່າການປະຕິບັດນັ້ນ ຫາກບໍ່ຂັດກັບສັນຍາ ຫລື ກົດໝາຍ ແລະ ເຈົ້າໜີ້ ກໍເຫັນດີນໍາ.

**ມາດຕາ 27. ສະຖານທີ່ປະຕິບັດສັນຍາ**

ສັນຍາ ຈະປະຕິບັດຢູ່ສະຖານທີ່ ຊຶ່ງສັນຍາ ຫລື ກົດໝາຍໄດ້ກໍານົດໄວ້. ໃນກໍລະນີທີ່ບໍ່ໄດ້ກໍານົດສະຖານທີ່ປະຕິບັດ ແມ່ນໃຫ້ປະຕິບັດສັນຍາ ຢູ່ສະຖານທີ່ ດັ່ງນີ້:

1. ການມອບອາຄານກໍ່ສ້າງ ໃຫ້ປະຕິບັດຢູ່ສະຖານທີ່ການກໍ່ສ້າງນັ້ນ;
2. ການໃຊ້ແທນໜີ້ສິນ ໃຫ້ປະຕິບັດຢູ່ບ່ອນຢູ່ຂອງເຈົ້າໜີ້ ໃນເວລາເຮັດສັນຍານັ້ນ ເວັ້ນເສຍແຕ່ການໃຊ້ແທນໜີ້ສິນຂອງການຈັດຕັ້ງຂອງລັດ, ລວມໝູ່ ແລະ ສັງຄົມ.

ຖ້າວ່າເຈົ້າໜີ້ ຫາກໄດ້ຍ້າຍບ່ອນຢູ່ໃນເວລາປະຕິບັດສັນຍາ ແລະ ໄດ້ແຈ້ງໃຫ້ລູກໜີ້ຊາບໃນເວລານັ້ນ ໃຫ້ປະຕິບັດຢູ່ບ່ອນຢູ່ໃໝ່ຂອງເຈົ້າໜີ້, ສ່ວນຄ່າໃຊ້ຈ່າຍທັງໝົດໃນການປະຕິບັດສັນຍານັ້ນ ແມ່ນເປັນພາລະຂອງເຈົ້າໜີ້;

3. ພັນທະອື່ນ ໃຫ້ປະຕິບັດຢູ່ບ່ອນຢູ່ຂອງລູກໜີ້ ໃນເວລາເຮັດສັນຍານັ້ນ. ຖ້າວ່າລູກໜີ້ ຫາກ ແມ່ນນິຕິບຸກຄົນ ກໍໃຫ້ປະຕິບັດຢູ່ສໍານັກງານຂອງນິຕິບຸກຄົນນັ້ນ.

**ມາດຕາ 28(ປັບປຸງ). ການຊຳລະ**

ການຊຳລະ ອາດຈະປະຕິບັດເປັນ ເງິນສົດ, ເງິນໂອນ, ເຊັກ ຫລື ວັດຖຸ ຫລື ແຮງງານ ຕາມການຕົກລົງເຫັນດີຂອງເຈົ້າຫນີ້.

ການຊຳລະ ຈະມີຂຶ້ນໄດ້ ກໍຕໍ່ເມື່ອຫາກມີການເຮັດໃບເກັບເງິນ ເສັຍກ່ອນ.

ໃນການຊຳລະນັ້ນ ເຈົ້າຫນີ້ ຕ້ອງເຮັດໃບຮັບເງິນ ຫລື ເອກະສານອື່ນ ດ້ວຍຕົນເອງ ຫລື ຕາມຄຳຮ້ອງຂໍຂອງລູກຫນີ້. ໃບຮັບເງິນ ຫລື ເອກະສານອື່ນນີ້ ຕ້ອງເຮັດໃນທັນໃດ ຫລື ຢ່າງຊ້າພາຍໃນ ສິບຫ້າ ວັນ ພາຍຫລັງທີ່ໄດ້ປະຕິບັດສັນຍາແລ້ວ.

ໃນກໍລະນີທີ່ມີການຊຳລະດ້ວຍເຊັກນັ້ນ ມື້ຊຳລະ ແມ່ນມື້ທີ່ເຈົ້າຫນີ້ໄດ້ຖອນເງິນ ຕາມຈຳນວນທີ່ກຳນົດໄວ້ໃນເຊັກນັ້ນ. ໃນການຊຳລະ ເປັນເງິນໂອນ ໃຫ້ຖືວ່າ ມື້ຊຳລະ ແມ່ນ ມື້ທີ່ເງິນເຂົ້າບັນຊີຂອງເຈົ້າຫນີ້. ໃນການຊຳລະທາງໄປສະນີ ໃຫ້ຖືວ່າ ມື້ຊຳລະ ແມ່ນ ມື້ທີ່ລູກຫນີ້ໄດ້ມອບເງິນ ຫລື ຊັບສິ່ງຂອງທາງໄປສະນີ.

**ມາດຕາ 29. ການແຈ້ງຂໍ້ຫຍຸ້ງຍາກໃນການປະຕິບັດສັນຍາ**

ເມື່ອມີຂໍ້ຫຍຸ້ງຍາກເກີດຂຶ້ນ ໃນການປະຕິບັດສັນຍາ ເຖິງວ່າຄູ່ສັນຍາຝ່າຍໃດຫນຶ່ງ ຫາກໄດ້ພະຍາຍາມພຽງໃດ ກໍບໍ່ສາມາດປະຕິບັດພັນທະຂອງຕົນໄດ້ ຢ່າງສະຫມ່ຳສະເຫມີນັ້ນ ຜູ້ກ່ຽວຕ້ອງແຈ້ງສາເຫດຂອງຂໍ້ຫຍຸ້ງຍາກດັ່ງກ່າວໃຫ້ອີກຝ່າຍຫນຶ່ງຊາບ ໃນເວລາອັນເຫມາະສົມ ກ່ອນກຳນົດເວລາຂອງການປະຕິບັດສັນຍາຈະສິ້ນສຸດ.

ການແຈ້ງຂໍ້ຫຍຸ້ງຍາກນັ້ນ ຈະບໍ່ເປັນສາເຫດທີ່ພາໃຫ້ລູກຫນີ້ ພົ້ນຈາກຄວາມຮັບຜິດຊອບຂອງຕົນໄປໄດ້, ພາຍຫລັງທີ່ຂໍ້ຫຍຸ້ງຍາກ ຫາກໄດ້ສິ້ນສຸດລົງແລ້ວ ລູກຫນີ້ ກໍຈະສືບຕໍ່ປະຕິບັດພັນທະຕາມສັນຍານັ້ນ.

**ມາດຕາ 30(ໃຫມ່). ການໂຈະການປະຕິບັດສັນຍາ**

ຄູ່ສັນຍາຝ່າຍໃດຫນຶ່ງ ທີ່ໄດ້ປະຕິບັດພັນທະຂອງຕົນ ສ່ວນໃດຫນຶ່ງແລ້ວ ອາດໂຈະການປະຕິບັດພັນທະຂອງຕົນ ໂດຍແຈ້ງໃຫ້ຄູ່ສັນຍາອີກຝ່າຍຫນຶ່ງໃນທັນທີ ຖ້າເຫັນວ່າ ຄູ່ສັນຍາຝ່າຍທີ່ຖືກແຈ້ງໂຈະນີ້ ຕົກຢູ່ໃນສະພາບໃດຫນຶ່ງ ຊຶ່ງອາດຈະສ້າງຜົນເສັຍຫາຍໃຫ້ແກ່ຕົນ ດັ່ງນີ້:

- ຖືກຮ້ອງຟ້ອງ ຫລື ຮ້ອງຂໍ ໃຫ້ລົ້ມລະລາຍ;
- ຂາດຄວາມເຊື່ອຖືໃນການດຳເນີນທຸລະກິດ ຊຶ່ງອາດຈະບໍ່ສາມາດປະຕິບັດສັນຍາໄດ້;
- ຕົກຢູ່ໃນສະພາບ ທີ່ເຮັດໃຫ້ຜູ້ກ່ຽວ ບໍ່ສາມາດປະຕິບັດສັນຍານັ້ນໄດ້.

ຄູ່ສັນຍາທີ່ໄດ້ໂຈະການປະຕິບັດນັ້ນ ຕ້ອງຮັບຜິດຊອບຕໍ່ຄູ່ສັນຍາອີກຝ່າຍຫນຶ່ງ ກ່ຽວກັບຄວາມເສັຍຫາຍທີ່ເກີດຂຶ້ນ ຖ້າວ່າການໂຈະນັ້ນ ຫາກໄດ້ເຮັດຂຶ້ນ ໂດຍບໍ່ມີສະພາບຕາມທີ່ກ່າວມາຂ້າງເທິງນີ້.

ຖ້າວ່າຄູ່ສັນຍາທີ່ຖືກແຈ້ງກ່ຽວກັບການໂຈະການປະຕິບັດສັນຍານັ້ນ ສາມາດຢັ້ງຢືນ ຫລື ໃຫ້ການຄໍ້າປະກັນໃນການປະຕິບັດສັນຍາທີ່ເໝາະສົມກ່ຽວກັບຄວາມສາມາດ ໃນການປະຕິບັດພັນທະຂອງຕົນ ຄູ່ສັນຍາທີ່ໄດ້ໂຈະນັ້ນ ຕ້ອງສືບຕໍ່ປະຕິບັດພັນທະຂອງຕົນ. ໃນກໍລະນີທີ່ບໍ່ສາມາດຢັ້ງຢືນ ຫລື ໃຫ້ການຄໍ້າປະກັນທີ່ເໝາະສົມໄດ້ ຄູ່ສັນຍາທີ່ໂຈະນັ້ນ ສາມາດຍົກເລີກສັນຍາໄດ້. ສໍາລັບການປະຕິບັດພັນທະຜ່ານມາ ຄູ່ສັນຍາທີ່ຖືກແຈ້ງໂຈະນັ້ນ ຕ້ອງທົດແທນຄືນໃຫ້ແກ່ຄູ່ສັນຍາທີ່ຍົກເລີກ.

ການໂຈະການປະຕິບັດສັນຍາ ສາມາດດໍາເນີນໄດ້ ໃນສັນຍາທຸກປະເພດ ເວັ້ນເສຍແຕ່ສັນຍາຝ່າຍດຽວ.

**ມາດຕາ 31. ຜົນບັງຄັບຂອງສັນຍາຕໍ່ບຸກຄົນອື່ນ**

ເຈົ້າຫນີ້ ມີສິດມອບສິດຂອງຕົນໃຫ້ເຈົ້າຫນີ້ຄົນໃຫມ່ ທວງເອົາຊັບສິ່ງຂອງຈາກລູກຫນີ້ທີ່ກ່ຽວຂ້ອງ.

ເຈົ້າຫນີ້ ຕ້ອງມອບເອກະສານຕ່າງໆ ກ່ຽວກັບການທວງຫນີ້ນັ້ນໃຫ້ເຈົ້າຫນີ້ຄົນໃຫມ່ ແລະຕ້ອງຮັບຜິດຊອບຕໍ່ຜູ້ກ່ຽວ ຖ້າວ່າສິດທີ່ມອບໃຫ້ຜູ້ກ່ຽວນັ້ນ ຫາກບໍ່ມີຄວາມຈິງ.

ໃນກໍລະນີທີ່ເຈົ້າຫນີ້ ຫາກໄດ້ເສຍຊີວິດໄປແລ້ວ ຜູ້ສືບທອດທີ່ໄດ້ຮັບມູນມໍຣະດົກ ກໍມີສິດທວງເອົາຊັບສິ່ງຂອງຈາກລູກຫນີ້ທີ່ກ່ຽວຂ້ອງນັ້ນໄດ້.

ລູກຫນີ້ ກໍມີສິດມອບພັນທະຂອງຕົນໃຫ້ລູກຫນີ້ຄົນໃຫມ່ ປະຕິບັດແທນຕົນໄດ້ ແຕ່ຕ້ອງໄດ້ຮັບການຕົກລົງເຫັນດີຈາກເຈົ້າຫນີ້ເສຍກ່ອນ.

ໃນກໍລະນີທີ່ລູກຫນີ້ ຫາກໄດ້ເສຍຊີວິດໄປແລ້ວ ຜູ້ສືບທອດທີ່ໄດ້ຮັບເອົາມູນມໍຣະດົກ ກໍມີພັນທະປະຕິບັດແທນຜູ້ກ່ຽວ.

**ມາດຕາ 32(ໃຫມ່). ສິດດໍາເນີນການແທນລູກຫນີ້**

ໃນກໍລະນີທີ່ລູກຫນີ້ ຫາກບໍ່ທວງຫນີ້ນໍາລູກຫນີ້ຂອງຕົນ ຊຶ່ງພາໃຫ້ເກີດຄວາມເສັຍປະໂຫຍດແກ່ເຈົ້າຫນີ້ ເຈົ້າຫນີ້ມີສິດຮ້ອງຟ້ອງທວງເອົາຫນີ້ສິນ ຕໍ່ສານແທນລູກຫນີ້ ເວັ້ນເສຍແຕ່ສິດຂອງລູກຫນີ້ນັ້ນ ແມ່ນຮຽກຮ້ອງໃຫ້ແຕ່ລູກຫນີ້ສະເພາະເທົ່ານັ້ນ ເປັນຜູ້ປະຕິບັດ.

ຄ່າໃຊ້ຈ່າຍໃນການດໍາເນີນການແທນຂອງເຈົ້າຫນີ້ ຕົກເປັນຄວາມຮັບຜິດຊອບຂອງລູກຫນີ້.

**ມາດຕາ 33. ຜົນສະທ້ອນຂອງການລະເມີດສັນຍາ**

ການລະເມີດສັນຍາ ແມ່ນ ການບໍ່ປະຕິບັດສັນຍາທັງຫມົດ ຫລື ບາງສ່ວນ ຫລື ການປະຕິບັດສັນຍາຢ່າງບໍ່ສົມເຫດສົມຜົນ ໂດຍຄູ່ສັນຍາຝ່າຍໃດຫນຶ່ງ ເຊັ່ນ ການປະຕິບັດສັນຍາບໍ່ມີຄຸນນະພາບ, ບໍ່ທັນກັບເວລາ, ບໍ່ຖືກສະຖານທີ່ ຊຶ່ງກໍານົດໄວ້ໃນສັນຍາ.

ຖ້າວ່າຄູ່ສັນຍາຝ່າຍໃດຫນຶ່ງ ຫາກໄດ້ລະເມີດສັນຍາ ຝ່າຍນັ້ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍທີ່ເກີດຂຶ້ນ ເວັ້ນເສຍແຕ່ການລະເມີດສັນຍານັ້ນ ຫາກເກີດຂຶ້ນຍ້ອນເຫດສຸດວິໄສ.

## ງ. ມາດຕະການຮັບປະກັນການປະຕິບັດສັນຍາ

### ມາດຕາ 34(ປັບປຸງ). ມາດຕະການຮັບປະກັນການປະຕິບັດສັນຍາ

ໃນການຮັບປະກັນການປະຕິບັດສັນຍາຢ່າງສົມເຫດສົມຜົນ, ເພື່ອຕອບສະໜອງຄວາມຕ້ອງການຂອງເຈົ້າໜີ້ ຫລື ທົດແທນຄ່າເສັຍຫາຍ ຊຶ່ງອາດຈະເກີດຂຶ້ນ ພາຍຫລັງການບໍ່ປະຕິບັດສັນຍາ ຫລື ການປະຕິບັດສັນຍາຢ່າງບໍ່ສົມເຫດສົມຜົນນັ້ນ ກົດໝາຍໄດ້ອະນຸຍາດໃຫ້ນຳໃຊ້ມາດຕະການຕ່າງໆ ຄື: ການຊວດຈຳ, ການຄ້ຳປະກັນ ດ້ວຍຫລັກຊັບ, ດ້ວຍບຸກຄົນ ຫລື ນິຕິບຸກຄົນ ແລະ ການປັບໃໝ.

### ມາດຕາ 35. ການຊວດຈຳ ແລະ ການຄ້ຳປະກັນ

ການຊວດຈຳ ແລະ ການຄ້ຳປະກັນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ.

### ມາດຕາ 36. ການປັບໃໝ

ການປັບໃໝ ແມ່ນ ມາດຕະການຕໍ່ຜູ້ລະເມີດສັນຍາ ຄື ບໍ່ປະຕິບັດສັນຍາ, ປະຕິບັດສັນຍາບໍ່ຄົບຖ້ວນ ຫລື ປະຕິບັດບໍ່ທັນຕາມກຳນົດເວລາ.

ການປັບໃໝ ໃຫ້ປະຕິບັດຕາມລະບຽບການສະເພາະຂອງຂະແໜງການທີ່ກ່ຽວຂ້ອງ ຫລື ຕາມການຕົກລົງຂອງຄູ່ສັນຍາ ໃນກໍລະນີທີ່ບໍ່ມີລະບຽບການສະເພາະ.

## ຈ. ການປ່ຽນແປງ, ການຍົກເລີກ ແລະ ການສິ້ນສຸດ ສັນຍາ

### ມາດຕາ 37. ການປ່ຽນແປງ ຫລື ການຍົກເລີກ ສັນຍາ

ສັນຍາ ອາດຈະຖືກປ່ຽນແປງ ຫລື ຍົກເລີກ ຕາມການຕົກລົງເຫັນດີຂອງຄູ່ສັນຍາ.

ໃນກໍລະນີທີ່ມີການລະເມີດສັນຍາ ຄູ່ສັນຍາຝ່າຍທີ່ໄດ້ຮັບຄວາມເສັຍຫາຍນັ້ນ ຈະປ່ຽນແປງ ຫລື ຍົກເລີກ ສັນຍາແຕ່ຝ່າຍດຽວກໍໄດ້ ເວັ້ນເສັຍແຕ່ ຄູ່ສັນຍາຫາກໄດ້ຕົກລົງກັນຢ່າງອື່ນ.

ການປ່ຽນແປງ ຫລື ການຍົກເລີກ ສັນຍາທີ່ເປັນລາຍລັກອັກສອນ ຕ້ອງເຮັດເປັນລາຍລັກອັກສອນ.

ເມື່ອສັນຍາຫາກຖືກຍົກເລີກແລ້ວ ສິ່ງທີ່ໄດ້ປະຕິບັດຕໍ່ກັນຜ່ານມາ ກໍໃຫ້ແລ້ວກັນໄປ. ຖ້າວ່າຝ່າຍໜຶ່ງ ຫາກໄດ້ປະຕິບັດພັນທະຂອງຕົນກ່ອນແລ້ວ ຝ່າຍທີ່ຍັງຄ້າງຄານັ້ນ ຕ້ອງໄດ້ປະຕິບັດຕອບແທນ. ສຳລັບພັນທະທີ່ຍັງບໍ່ທັນໄດ້ປະຕິບັດຕໍ່ກັນນັ້ນ ກໍໃຫ້ເລີກແລ້ວກັນໄປ.

**ມາດຕາ 38. ການສິ້ນສຸດສັນຍາ**

ສັນຍາ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

- ສັນຍາທີ່ໄດ້ປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ;
- ຄູ່ສັນຍາ ໄດ້ເຂົ້າຮ່ວມເປັນອັນດຽວກັນ;
- ຄູ່ສັນຍາ ໄດ້ມີການຕົກລົງກັນ;
- ສັນຍາ ບໍ່ສາມາດປະຕິບັດໄດ້;
- ຄູ່ສັນຍາຝ່າຍໃດໜຶ່ງ ໄດ້ເສຍຊີວິດ ຊຶ່ງບຸກຄົນອື່ນບໍ່ສາມາດສືບຕໍ່ປະຕິບັດໄດ້;
- ນິຕິບຸກຄົນທີ່ເປັນຄູ່ສັນຍາ ໄດ້ຖືກຍຸບເລີກ ຫລື ລົ້ມລະລາຍ.

ໃນກໍລະນີທີ່ນິຕິບຸກຄົນໃດໜຶ່ງ ຫາກຖືກຍຸບເລີກ ຫລື ລົ້ມລະລາຍ ຄູ່ສັນຍາຂອງນິຕິບຸກຄົນນັ້ນ ມີສິດທວງເອົາຄ່າໃຊ້ຈ່າຍ ແລະ ຄ່າເສັຍຫາຍຕ່າງໆ ຈາກຜູ້ຮັບຜິດຊອບຊັບສິ່ງຂອງ ຂອງນິຕິບຸກຄົນທີ່ໄດ້ຖືກຍຸບເລີກ ຫລື ລົ້ມລະລາຍນັ້ນ.

## ໝວດທີ 2

## ປະເພດສັນຍາ

### ກ. ສັນຍາຊື້ຂາຍ

**ມາດຕາ 39. ສັນຍາຊື້ຂາຍ**

ສັນຍາຊື້ຂາຍ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ຂາຍ ມີພັນທະມອບຊັບສິ່ງຂອງໃຫ້ເປັນກຳມະສິດຂອງຜູ້ຊື້ ແລະ ຜູ້ຊື້ ຕ້ອງຮັບເອົາຊັບສິ່ງຂອງ ແລະ ມີພັນທະຈ່າຍເງິນຕາມລາຄາທີ່ໄດ້ຕົກລົງກັນ.

ຜູ້ຂາຍ ຈະຂາຍຊັບສິ່ງຂອງອັນໃດກໍໄດ້ ທີ່ເປັນກຳມະສິດຂອງຕົນ. ຖ້າວ່າຊັບສິ່ງຂອງທີ່ຂາຍໃຫ້ຜູ້ຊື້ນັ້ນຫາກຖືກຮິບຕາມຄຳຕັດສິນຂອງສານ ຫລື ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແລ້ວ ຜູ້ຂາຍ ຕ້ອງທົດແທນຄ່າເສັຍຫາຍໃຫ້ແກ່ຜູ້ຊື້.

ໃນການເຮັດສັນຍາ ຜູ້ຂາຍ ຕ້ອງແຈ້ງໃຫ້ຜູ້ຊື້ຊາບ ກ່ຽວກັບສິດຂອງບຸກຄົນອື່ນ ໃນຊັບສິ່ງຂອງທີ່ຂາຍ ເຊັ່ນ: ຊັບສິ່ງຂອງທີ່ຂາຍນັ້ນ ຍັງມີຜູ້ເຊົ່າຢູ່. ການບໍ່ແຈ້ງໃຫ້ຊາບນີ້ ຈະພາໃຫ້ຜູ້ຊື້ ມີສິດຮ້ອງຂໍລົບລ້າງສັນຍາ ແລະ ຮ້ອງຂໍເອົາຄ່າເສັຍຫາຍ ຫລື ຫລຸດຜ່ອນລາຄາຊື້.

ເມື່ອສິດກ່ຽວກັບກຳມະສິດ ຫາກເປັນຂອງຜູ້ຊື້ກ່ອນການມອບຊັບສິ່ງຂອງແລ້ວ ຜູ້ຂາຍຍັງມີພັນທະຮັກສາຊັບສິ່ງຂອງດັ່ງກ່າວໂດຍບໍ່ໃຫ້ມີການເສັຍຫາຍ ຫລື ເປ່ເພ ຈົນກວ່າຜູ້ຊື້ຈະຮັບເອົາ.

ຜູ້ຊື້ ເປັນເຈົ້າກຳມະສິດໃນຊັບສິ່ງຂອງ ທີ່ຕົນໄດ້ຊື້ນັ້ນ :

- ນັບແຕ່ເວລາຜູ້ຊື້ ແລະ ຜູ້ຂາຍໄດ້ມອບເງິນ ແລະ ຊັບສິ່ງຂອງໃຫ້ກັນ;

- ນັບແຕ່ເວລາຜູ້ຊື້ໄດ້ຈ່າຍເງິນຢ່າງຄົບຖ້ວນເປັນຕົ້ນໄປ ເຖິງວ່າຜູ້ຂາຍຍັງບໍ່ທັນໄດ້ມອບ ຊັບສິ່ງຂອງໃຫ້ກໍຕາມ ຫລື ນັບແຕ່ເວລາຜູ້ຂາຍໄດ້ມອບຊັບສິ່ງຂອງໃຫ້ແລ້ວ ແຕ່ຜູ້ຊື້ຍັງບໍ່ທັນໄດ້ຈ່າຍເງິນກໍຕາມ ຕາມການຕົກລົງກັນ.

**ມາດຕາ 40. ຄຸນນະພາບຂອງຊັບສິ່ງຂອງທີ່ຂາຍ**

ຄຸນນະພາບຂອງຊັບສິ່ງຂອງທີ່ຂາຍ ຕ້ອງໃຫ້ຖືກຕ້ອງຕາມເນື້ອໃນຂອງສັນຍາ. ຖ້າວ່າຊັບສິ່ງຂອງທີ່ຂາຍນັ້ນ ຫາກບໍ່ມີຄຸນນະພາບຕາມທີ່ໄດ້ກຳນົດໄວ້ໃນສັນຍາແລ້ວ ຜູ້ຂາຍ ຕ້ອງຮັບຜິດຊອບຕໍ່ຊັບສິ່ງຂອງດັ່ງກ່າວ.

ໃນກໍລະນີທີ່ຜູ້ຊື້ ຫາກໄດ້ຮູ້ວ່າ ຊັບສິ່ງຂອງນັ້ນບໍ່ມີຄຸນນະພາບແລ້ວ ຜູ້ຊື້ມີສິດຂໍປ່ຽນເອົາຊັບສິ່ງຂອງປະເພດດຽວກັນ ທີ່ມີຄຸນນະພາບ ຫລື ຂໍຫລຸດລາຄາ ຫລື ລົບລ້າງສັນຍາ ພ້ອມທັງທວງເອົາການໃຊ້ແທນຄ່າເສັຍຫາຍ.

ຜູ້ຊື້ ຕ້ອງກວດເບິ່ງຄຸນນະພາບຂອງຊັບສິ່ງຂອງທີ່ຊື້ ແລະ ຕ້ອງແຈ້ງໃຫ້ຜູ້ຂາຍຊາບ ຢ່າງຮີບດ່ວນ ໃນກໍລະນີທີ່ພົບເຫັນຄວາມບົກພ່ອງໃນຊັບສິ່ງຂອງທີ່ຊື້ ຖ້າບໍ່ດັ່ງນັ້ນ ຜູ້ຊື້ ຕ້ອງຮັບຜິດຊອບເອົາເອງຕໍ່ຄວາມບົກພ່ອງເຫລົ່ານັ້ນ.

**ມາດຕາ 41(ປັບປຸງ). ການຂາຍສິນຄ້າເປັນເງິນຜ່ອນ**

ໃນການຊື້ຂາຍສິນຄ້າ ຜູ້ຂາຍ ອາດຈະຂາຍເປັນເງິນຜ່ອນກໍໄດ້. ຜູ້ຊື້ ມີກຳມະສິດໃນສິນຄ້າທີ່ຂາຍເປັນເງິນຜ່ອນນັ້ນ ນັບແຕ່ວັນທີ່ໄດ້ຈ່າຍຄ່າສິນຄ້າຄົບຖ້ວນເປັນຕົ້ນໄປ.

ໃນກໍລະນີທີ່ຜູ້ຊື້ ຫາກຈ່າຍບໍ່ຄົບຖ້ວນ ແລະ ທັນຕາມກຳນົດເວລາ ເປັນເວລາ ສາມງວດລຽນຕິດ ຜູ້ຂາຍ ມີສິດຍົກເລີກສັນຍາ ແລະ ທວງເອົາສິນຄ້າທີ່ຂາຍນັ້ນຄືນ, ສ່ວນເງິນທີ່ຜູ້ຊື້ໄດ້ຈ່າຍໄປແລ້ວນັ້ນ ກໍຈະບໍ່ຖືກສົ່ງຄືນ.

ໃນກໍລະນີທີ່ສິນຄ້ານັ້ນ ຫາກຖືກເປ່ເພ ຍ້ອນຄວາມຜິດຂອງຜູ້ຊື້ແລ້ວ ຜູ້ຊື້ ຕ້ອງຮັບຜິດຊອບຈ່າຍຄ່າສິນຄ້າຈົນຄົບຖ້ວນ ຕາມສັນຍາ.

ຖ້າວ່າຜູ້ຊື້ທີ່ຍັງບໍ່ທັນໄດ້ເປັນເຈົ້າກຳມະສິດໃນສິນຄ້າທີ່ຊື້ເປັນເງິນຜ່ອນນັ້ນ ຫາກນຳເອົາໄປຂາຍຕໍ່ແລ້ວ ຜູ້ກ່ຽວ ກໍຈະເປັນຜູ້ກະທຳຜິດໃນສະຖານຍັກຍອກ, ສໍ້ໂກງຊັບ. ສຳລັບຜູ້ຂາຍສິນຄ້າເປັນເງິນຜ່ອນ ແລະ ຜູ້ຊື້ຕໍ່ ທີ່ໄດ້ຮັບຄວາມເສຍຫາຍ ກໍມີສິດຮ້ອງຟ້ອງ ຕາມລະບຽບກົດໝາຍ.

ການຂາຍສິນຄ້າເປັນເງິນຜ່ອນ ຕ້ອງປະຕິບັດຕາມລາຄາທີ່ໄດ້ຕົກລົງກັນໃນມື້ຂາຍນັ້ນ. ການປ່ຽນແປງລາຄາສິນຄ້າທີ່ຂາຍເປັນເງິນຜ່ອນ ໃນເວລາຕໍ່ມາ ກໍຈະບໍ່ພາໃຫ້ລາຄາທີ່ໄດ້ຕົກລົງກັນແລ້ວນັ້ນມີການປ່ຽນແປງແຕ່ຢ່າງໃດ.

**ມາດຕາ 42. ການຊື້ຊັບສິ່ງຂອງທີ່ໄດ້ມາຢ່າງຜິດກົດໝາຍ**

ບຸກຄົນທີ່ໄດ້ຊື້ຊັບສິ່ງຂອງດ້ວຍຄວາມບໍລິສຸດໃຈ ແມ່ນ ບຸກຄົນທີ່ເຊື່ອວ່າຕົນໄດ້ຊື້ຊັບສິ່ງຂອງທີ່ຖືກຕ້ອງຕາມກົດໝາຍ ຊຶ່ງອາດຈະສະແດງອອກດ້ວຍການຊື້ໃນລາຄາທີ່ເໝາະສົມ ຕາມທ້ອງຕະຫລາດໃນເວລານັ້ນ, ຊື້ ແລະ ນຳໃຊ້ຊັບສິ່ງຂອງຢ່າງເປີດເຜີຍ, ລຽນຕິດ ແລະ ສະຫງົບ ແລ້ວ ເຈົ້າຂອງຊັບ ຈະເອົາຊັບສິ່ງຂອງນັ້ນຄືນໄດ້ ກໍຕໍ່ເມື່ອຫາກຜູ້ກ່ຽວໄດ້ທົດແທນລາຄາທີ່ຜູ້ຊື້ໄດ້ຈ່າຍໄປແລ້ວນັ້ນ ແຕ່ເຈົ້າຂອງຊັບສິ່ງຂອງ ກໍມີສິດຮ້ອງຟ້ອງຜູ້ທີ່ເອົາຊັບສິ່ງຂອງຂອງຕົນມາຂາຍ ຢ່າງຜິດກົດໝາຍນັ້ນ.

ບຸກຄົນທີ່ໄດ້ຊື້ຊັບສິ່ງຂອງດ້ວຍຄວາມບໍ່ບໍລິສຸດໃຈ ແມ່ນ ບຸກຄົນທີ່ຊື້ຊັບສິ່ງຂອງ ໂດຍຮູ້ ຫລື ຄວນຮູ້ວ່າ ຕົນໄດ້ຊື້ຊັບສິ່ງຂອງທີ່ບໍ່ຖືກຕ້ອງຕາມກົດໝາຍ ຊຶ່ງອາດຈະສະແດງອອກດ້ວຍການຊື້ໃນລາຄາທີ່ບໍ່ເໝາະສົມ ຕາມທ້ອງຕະຫລາດໃນເວລານັ້ນ, ຊື້ ແລະ ນຳໃຊ້ຊັບສິ່ງຂອງຢ່າງປິດລັບ, ບໍ່ລຽນຕິດ, ມີການທັກທ້ວງ ແລ້ວ ເຈົ້າຂອງຊັບ ມີສິດເອົາຊັບສິ່ງຂອງນັ້ນຄືນ ໂດຍບໍ່ມີການທົດແທນຄ່າຊັບສິ່ງຂອງໃຫ້ແກ່ຜູ້ຊື້ແຕ່ຢ່າງໃດ. ຜູ້ຊື້ ຈະຕໍ່ວ່າເອົາເງິນທີ່ຊື້ຊັບສິ່ງຂອງນັ້ນຄືນນຳຜູ້ຂາຍກໍໄດ້ ແຕ່ບໍ່ມີສິດຮ້ອງຟ້ອງຕໍ່ສານ.

**ມາດຕາ 43. ການນຳສົ່ງສິນຄ້າ ຫລື ຊັບສິ່ງຂອງ ທີ່ຂາຍ**

ຜູ້ຂາຍ ຈະນຳສົ່ງສິນຄ້າ ຫລື ຊັບສິ່ງຂອງ ທີ່ຂາຍນັ້ນ ໄປຮອດ ບ່ອນຢູ່ຂອງຜູ້ຊື້ ຫລື ສະຖານທີ່ໃດໜຶ່ງ ຕາມທີ່ໄດ້ຕົກລົງກັນ.

ຜູ້ຊື້ ຕ້ອງຮັບເອົາສິນຄ້າ ຫລື ຊັບສິ່ງຂອງ ທີ່ນຳສົ່ງມາໃຫ້ຕົນ. ສ່ວນການໃຊ້ຈ່າຍຄ່ານຳສົ່ງນັ້ນແມ່ນຂຶ້ນກັບການຕົກລົງຂອງຄູ່ສັນຍາ.

ຖ້າວ່າຜູ້ຂາຍ ຫາກບໍ່ນຳສົ່ງສິນຄ້າ ຫລື ຊັບສິ່ງຂອງ ທີ່ຂາຍຕາມກຳນົດເວລາ ຊຶ່ງໄດ້ຕົກລົງກັນແລ້ວນັ້ນ ຜູ້ຊື້ຈະບໍ່ຮັບເອົາສິນຄ້າ ຫລື ຊັບສິ່ງຂອງ ນັ້ນກໍໄດ້.

ໃນກໍລະນີທີ່ຜູ້ຊື້ ຫາກໄດ້ຈ່າຍຄ່າສິນຄ້າ, ຄ່ານຳສົ່ງແລ້ວ ຜູ້ຊື້ ຈະໃຫ້ຜູ້ຂາຍຈ່າຍຄ່າປ່ວຍການຊັບແກ່ຕົນ ຕາມຄວາມເໝາະສົມ.

ຖ້າວ່າຜູ້ຂາຍ ຫາກໄດ້ນຳສົ່ງສິນຄ້າ ຫລື ຊັບສິ່ງຂອງ ທີ່ຂາຍນັ້ນ ບໍ່ຄົບຕາມປະລິມານ, ບໍ່ຄົບຊຸດ, ບໍ່ມີຄຸນນະພາບ ຕາມທີ່ໄດ້ຕົກລົງຊື້ຂາຍກັນ ຜູ້ຊື້ ຈະບໍ່ຮັບເອົາ ແລະ ຈະບໍ່ຈ່າຍຄ່າສິນຄ້ານັ້ນກໍໄດ້. ຖ້າວ່າຜູ້ຊື້ ຫາກໄດ້ຈ່າຍຄ່າສິນຄ້ານັ້ນແລ້ວ ຜູ້ຂາຍ ຈະໄດ້ສົ່ງເງິນຄືນ ແລະ ອາດຈະຈ່າຍຄ່າເສຍຫາຍອີກດ້ວຍ.

## ຂ. ສັນຍາແລກປ່ຽນ

**ມາດຕາ 44. ສັນຍາແລກປ່ຽນ**

ສັນຍາແລກປ່ຽນ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຝ່າຍໜຶ່ງ ໄດ້ເອົາຊັບສິ່ງຂອງທີ່ເປັນກຳມະສິດຂອງຕົນ ມອບໃຫ້ອີກຝ່າຍໜຶ່ງ ແລະ ຝ່າຍນີ້ກໍໄດ້ເອົາຊັບສິ່ງຂອງອັນອື່ນ ທີ່ເປັນກຳມະສິດຂອງ

ຕົນ ຕອບແທນໃຫ້.

**ມາດຕາ 45(ໃໝ່). ການເພີ່ມເງິນເຂົ້າໃນການແລກປ່ຽນ**

ໃນການແລກປ່ຽນນັ້ນ ຄູ່ສັນຍາຝ່າຍໃດໜຶ່ງ ອາດຈະເພີ່ມເງິນເຂົ້າ ເມື່ອຊັບສິ່ງຂອງ ຂອງຕົນທີ່ແລກປ່ຽນນັ້ນ ຫາກມີມູນຄ່າຕໍ່າກວ່າມູນຄ່າຊັບສິ່ງຂອງ ຂອງ ອີກຝ່າຍໜຶ່ງ.

**ມາດຕາ 46(ປັບປຸງ). ລະບຽບການກ່ຽວກັບສັນຍາແລກປ່ຽນ**

ລະບຽບການກ່ຽວກັບສັນຍາແລກປ່ຽນ ໃຫ້ປະຕິບັດຄືກັນກັບລະບຽບການຂອງສັນຍາຊື້ຂາຍ.

ສັນຍາແລກປ່ຽນ ຈະມີຜົນສັກສິດ ເມື່ອຄູ່ສັນຍານັ້ນ ໄດ້ມອບຊັບສິ່ງຂອງໃຫ້ແກ່ກັນແລ້ວ.

## ຄ. ສັນຍາມອບຊັບ (ໃໝ່)

**ມາດຕາ 47(ໃໝ່). ສັນຍາມອບຊັບ**

ສັນຍາມອບຊັບ ແມ່ນ ການຕົກລົງຂອງເຈົ້າຂອງຊັບ ຊຶ່ງເອົາຊັບສິ່ງຂອງທີ່ເປັນກຳມະສິດຂອງຕົນ ໃຫ້ຜູ້ໃດໜຶ່ງ ດ້ວຍຄວາມສະໝັກໃຈ ໂດຍບໍ່ຮຽກຮ້ອງສິ່ງຕອບແທນ ແລະ ຜູ້ຮັບ ກໍເຫັນດີຮັບເອົາຊັບນັ້ນ.

ເປົ້າໝາຍຂອງສັນຍາມອບຊັບ ອາດຈະແມ່ນ ສັງຫາລິມະຊັບ ຫລື ອະສັງຫາລິມະຊັບ.

**ມາດຕາ 48(ໃໝ່). ການມອບສັງຫາລິມະຊັບ**

ການມອບສັງຫາລິມະຊັບ ແມ່ນ ການມອບຊັບເຄື່ອນທີ່ ຊຶ່ງຜູ້ຮັບ ກາຍເປັນເຈົ້າກຳມະສິດ ນັບແຕ່ເວລາຮັບເປັນຕົ້ນໄປ.

ສຳລັບການມອບສັງຫາລິມະຊັບ ທີ່ເຮັດເປັນລາຍລັກອັກສອນ ຊຶ່ງຕ້ອງຈົດທະບຽນນັ້ນ ຈະມີຜົນສັກສິດ ນັບແຕ່ວັນໄດ້ຈົດທະບຽນເປັນຕົ້ນໄປ.

**ມາດຕາ 49(ໃໝ່). ການມອບອະສັງຫາລິມະຊັບ**

ການມອບອະສັງຫາລິມະຊັບ ແມ່ນ ການມອບຊັບຄົງທີ່ ໂດຍມີເອກະສານຢັ້ງຢືນກຳມະສິດ ຫລື ສິດນຳໃຊ້ຢ່າງຖືກຕ້ອງຕາມກົດໝາຍ ຈາກອົງການທີ່ມີສິດກ່ຽວຂ້ອງ.

ການມອບອະສັງຫາລິມະຊັບ ຕ້ອງເຮັດເປັນລາຍລັກອັກສອນ.

ຜູ້ຮັບອະສັງຫາລິມະຊັບ ຈະກາຍເປັນເຈົ້າກຳມະສິດ ນັບແຕ່ວັນໄດ້ຈົດທະບຽນເປັນຕົ້ນໄປ.

**ມາດຕາ 50(ໃໝ່). ສັນຍາຍົກຊັບ**

ສັນຍາຍົກຊັບ ແມ່ນ ການຕົກລົງຂອງເຈົ້າຂອງຊັບ ທີ່ເອົາຊັບຂອງຕົນໃຫ້ຜູ້ໃດໜຶ່ງ ໂດຍມີເງື່ອນໄຂ ທີ່ຖືກຕ້ອງຕາມກົດໝາຍ ຊຶ່ງຜູ້ຮັບ ຈະຕ້ອງປະຕິບັດກ່ອນ ຫລື ຫລັງ ການຮັບຊັບນັ້ນ.

ຜູ້ຮັບຊັບ ຈະກາຍເປັນເຈົ້າກຳມະສິດ ເມື່ອໄດ້ປະຕິບັດເງື່ອນໄຂດັ່ງກ່າວຄົບຖ້ວນແລ້ວ. ໃນກໍລະນີ ປະຕິບັດເງື່ອນໄຂບໍ່ຄົບຖ້ວນ ຫລື ບໍ່ສາມາດປະຕິບັດຕາມເງື່ອນໄຂນັ້ນໄດ້ ຜູ້ຍົກຊັບ ມີສິດຍົກເລີກສັນຍາດັ່ງກ່າວ.

**ມາດຕາ 51(ໃໝ່). ຂອບເຂດຂອງການມອບຊັບ ແລະ ການຍົກຊັບ**

ຂອບເຂດຂອງການມອບຊັບ ແລະ ການຍົກຊັບ ໃຫ້ປະຕິບັດຕາມມາດຕາ 25 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ.

**ມາດຕາ 52(ໃໝ່). ພັນທະໃນການແຈ້ງຈຸດບົກພ່ອງຂອງຊັບ**

ຜູ້ມອບຊັບ ຫລື ຜູ້ຍົກຊັບ ຕ້ອງແຈ້ງຈຸດບົກພ່ອງ ຫລື ຈຸດພິເສດຂອງຊັບສິ່ງຂອງທີ່ມອບ ຫລື ຍົກໃຫ້ຜູ້ຮັບນັ້ນຊາບ. ໃນກໍລະນີທີ່ບໍ່ໄດ້ແຈ້ງ ຜູ້ມອບຊັບ ຫລື ຜູ້ຍົກຊັບ ຕ້ອງຮັບຜິດຊອບຕໍ່ຄວາມເສັຍຫາຍ ທີ່ເກີດຂຶ້ນຈາກຈຸດບົກພ່ອງ ຫລື ຈຸດພິເສດຂອງຊັບສິ່ງຂອງດັ່ງກ່າວ.

## ໗. ສັນຍາຂາຍຝາກ

**ມາດຕາ 53. ສັນຍາຂາຍຝາກ**

ສັນຍາຂາຍຝາກ ແມ່ນ ການຕົກລົງຂອງຄູ່ສັນຍາ ເພື່ອຊື້ຂາຍຊັບສິ່ງຂອງ ຊຶ່ງຜູ້ຂາຍຍັງມີສິດຊື້ຊັບສິ່ງຂອງທີ່ຂາຍນັ້ນຄືນໄດ້ພາຍໃນກຳນົດ ສາມ ປີ ຕາມລາຄາທີ່ຕົນໄດ້ຂາຍໄປແລ້ວນັ້ນ.

ເມື່ອໝົດກຳນົດເວລາ ສາມ ປີແລ້ວ ຜູ້ຂາຍ ມີສິດຕໍ່ກຳນົດເວລາຂາຍຝາກອອກໄປອີກ ຖ້າຫາກວ່າໄດ້ມີການຕົກລົງກັນກ່ອນ ໃນເວລາເຮັດສັນຍາ ແຕ່ບໍ່ໃຫ້ເກີນ ໜຶ່ງປີ.

ເມື່ອຮອດກຳນົດເວລາແລ້ວ ຖ້າວ່າຜູ້ຂາຍ ຫາກບໍ່ຊື້ເອົາຊັບສິ່ງຂອງນັ້ນຄືນ ຜູ້ຊື້ ກໍຈະເປັນເຈົ້າກຳມະສິດກ່ຽວກັບຊັບສິ່ງຂອງນັ້ນໂດຍເດັດຂາດ.

**ມາດຕາ 54. ຜົນຂອງສັນຍາຂາຍຝາກ**

ຖ້າວ່າຊັບສິ່ງຂອງທີ່ຂາຍຝາກນັ້ນ ຫາກມີຜົນໃດໜຶ່ງເກີດຂຶ້ນ ຜູ້ຊື້ທີ່ໄດ້ຈ່າຍເງິນຄ່າຊັບສິ່ງຂອງໝົດແລ້ວ ກໍຈະເປັນເຈົ້າກຳມະສິດ ກ່ຽວກັບຜົນທີ່ເກີດມານັ້ນ. ໃນກໍລະນີທີ່ຜູ້ຊື້ ຫາກຍັງບໍ່ທັນໄດ້ຈ່າຍເງິນຄ່າຊັບສິ່ງຂອງນັ້ນໝົດ ຜູ້ຊື້ ຈະບໍ່ມີສິດໄດ້ຮັບຜົນທີ່ເກີດມານັ້ນ ເວັ້ນເສັຍແຕ່ສັນຍາ ໄດ້ກຳນົດໄວ້ຢ່າງອື່ນ.

**ມາດຕາ 55. ການປົກປັກຮັກສາຊັບສິ່ງຂອງທີ່ຂາຍຝາກ**

ຜູ້ຊື້ ຕ້ອງປົກປັກຮັກສາຊັບສິ່ງຂອງທີ່ຂາຍຝາກ ແລະ ຜູ້ຂາຍ ຕ້ອງທົດແທນຄ່າໃຊ້ຈ່າຍຕ່າງໆ ໃນການປົກປັກຮັກສາຊັບສິ່ງຂອງນັ້ນ ຊຶ່ງຜູ້ຊື້ໄດ້ຈ່າຍໄປແລ້ວ. ໃນກໍລະນີທີ່ການໃຊ້ຈ່າຍດັ່ງກ່າວ ຫາກມີມູນຄ່າພຽງເລັກໜ້ອຍ ກໍຈະຕົກເປັນພາລະຂອງຜູ້ຊື້ເອງ. ຜູ້ຊື້ ມີສິດນໍາໃຊ້ຊັບສິ່ງຂອງທີ່ຂາຍຝາກນັ້ນ. ຖ້າວ່າຜູ້ຂາຍ ຫາກຊື້ເອົາຊັບສິ່ງຂອງຄືນ ພາຍໃນກໍານົດເວລາແລ້ວ ຜູ້ຊື້ ກໍຕ້ອງສົ່ງຊັບສິ່ງຂອງນັ້ນຄືນໃນສະພາບເດີມ.

## ຈ. ສັນຍາກູ້ຢືມ

**ມາດຕາ 56(ປັບປຸງ). ສັນຍາກູ້ຢືມ**

ສັນຍາກູ້ຢືມ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ໃຫ້ຢືມ ໄດ້ເອົາເງິນ ຫລື ຊັບສິ່ງຂອງຂອງຕົນ ໃຫ້ເປັນກໍາມະສິດແກ່ຜູ້ກູ້ຢືມ ແລະ ຜູ້ກູ້ຢືມ ຕ້ອງສົ່ງຈໍານວນເງິນ ຫລື ຊັບສິ່ງຂອງ ປະເພດທີ່ກູ້ຢືມນັ້ນ ຕາມຈໍານວນເທົ່າທຽມກັນ ແລະ ຄຸນນະພາບດຽວກັນ ຄືນແກ່ຜູ້ໃຫ້ຢືມ ຕາມກໍານົດເວລາທີ່ໄດ້ກໍານົດໄວ້ໃນສັນຍາ.

ຖ້າວ່າສັນຍາກູ້ຢືມ ຫາກບໍ່ມີກໍານົດເວລາ ກໍໃຫ້ປະຕິບັດຕາມການສະເໜີຂອງຜູ້ໃຫ້ຢືມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້.

ການກູ້ຢືມເງິນ ຫລື ຊັບສິ່ງຂອງ ຈະມີດອກເບ້ຍໄດ້ ກໍຕໍ່ເມື່ອຫາກໄດ້ກໍານົດໄວ້ໃນສັນຍາເທົ່ານັ້ນ. ໃນກໍລະນີທີ່ມີການໃຊ້ແທນໜີ້ສິນຊັກຊ້າ ຊຶ່ງສ້າງຄວາມເສັຍປະໂຫຍດແກ່ຜູ້ໃຫ້ຢືມ ກໍອາດຈະພິຈາລະນາຄ່າປ່ວຍການຊົບໃຫ້ ຖ້າຫາກມີການຮ້ອງຂໍ.

ການກູ້ຢືມເງິນຈາກທະນາຄານ ຫລື ສະຖາບັນການເງິນ ທີ່ສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍ ໃຫ້ປະຕິບັດຕາມລະບຽບການຂອງທະນາຄານ ຫລື ສະຖາບັນການເງິນ ທີ່ໃຫ້ກູ້ຢືມເງິນນັ້ນ.

ດອກເບ້ຍຂອງການກູ້ຢືມເງິນ ລະຫວ່າງ ບຸກຄົນ ຫລື ການຈັດຕັ້ງເປັນເງິນກີບ ຫລື ເງິນຕາຕ່າງປະເທດ ໃຫ້ປະຕິບັດຕາມການຕົກລົງຂອງຄູ່ສັນຍາ. ສໍາລັບດອກເບ້ຍທີ່ໄດ້ປະຕິບັດແລ້ວນັ້ນ ກໍໃຫ້ແລ້ວໄປ, ສ່ວນດອກເບ້ຍທີ່ຍັງບໍ່ທັນໄດ້ປະຕິບັດນັ້ນ ຖ້າຫາກມີການຮ້ອງຟ້ອງຂຶ້ນສານ ແມ່ນໃຫ້ອີງໃສ່ອັດຕາດອກເບ້ຍຂອງທະນາຄານທຸລະກິດລັດ ບ່ອນຂໍ້ຂັດແຍ່ງເກີດຂຶ້ນ ທີ່ວາງອອກໃນໄລຍະນັ້ນ ແຕ່ໃນການກູ້ຢືມນັ້ນ ບໍ່ໃຫ້ເອົາດອກເບ້ຍເງິນກູ້ມາເປັນຕົ້ນທຶນ.

ເມື່ອຮອດກໍານົດເວລາໃຊ້ແທນ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາແລ້ວ ຖ້າວ່າຜູ້ໃຫ້ຢືມຫາກບໍ່ຍອມຮັບເອົາເງິນ ຫລື ຊັບສິ່ງຂອງຈາກຜູ້ກູ້ຢືມ ກໍຈະບໍ່ມີການຄິດໄລ່ດອກເບ້ຍໃຫ້.

ສໍາລັບການກູ້ຢືມເງິນກັບການຈັດຕັ້ງຕ່າງປະເທດ ຫລື ສາກົນນັ້ນ ການຄິດໄລ່ດອກເບ້ຍ ໃຫ້ອີງຕາມການຕົກລົງຂອງຄູ່ສັນຍາ.

ເມື່ອມີຂໍ້ຂັດແຍ່ງ ກ່ຽວກັບການຈ່າຍດອກເບ້ຍ ຫລື ຕົ້ນທຶນ ລະຫວ່າງ ເຈົ້າໜີ້ ແລະ ລູກໜີ້ ແມ່ນໃຫ້ເອົາຕົ້ນທຶນ ແລະ ດອກເບ້ຍ ທີ່ຕ້ອງຈ່າຍທັງໝົດນັ້ນ ມາລວມເຂົ້າກັນ ແລ້ວຈຶ່ງໃຫ້ລູກໜີ້ ຊຳລະຈົນກວ່າຈະຄົບຖ້ວນ.

ສັນຍາກູ້ຢືມ ຕ້ອງເຮັດເປັນລາຍລັກອັກສອນ.

**ມາດຕາ 57(ປັບປຸງ). ຄວາມຮັບຜິດຊອບຂອງຄູ່ຜົວເມັຍຕໍ່ໜີ້ສິນ**

ຄູ່ຜົວເມັຍ ຫລື ຝ່າຍໃດໜຶ່ງ ຕ້ອງຮັບຜິດຊອບຕໍ່ການກູ້ຢືມເງິນ ຫລື ຊັບສິ່ງຂອງ ໃນກໍລະນີດັ່ງນີ້:

– ຜົວ ແລະ ເມັຍ ໄດ້ພ້ອມກັນກູ້ຢືມເງິນ ຫລື ຊັບສິ່ງຂອງນັ້ນ;

– ຜົວ ຫລື ເມັຍ ໄດ້ກູ້ຢືມເງິນ ຫລື ຊັບສິ່ງຂອງແຕ່ຝ່າຍດຽວ ເພື່ອນຳມາໃຊ້ຈ່າຍໃນຄອບຄົວ;

– ຜົວ ຫລື ເມັຍ ໄດ້ກູ້ຢືມເງິນ ຫລື ຊັບສິ່ງຂອງແຕ່ຝ່າຍດຽວ ເພື່ອຜົນປະໂຫຍດສ່ວນຕົວຂອງຜູ້ກ່ຽວ. ໃນກໍລະນີນີ້ ຖ້າວ່າ ຜົວ ຫລື ເມັຍ ຫາກໄດ້ເອົາເງິນຂອງຕົນ ຫລື ສິນສົມສ້າງ ໃຊ້ແທນໜີ້ສິນນັ້ນ ກໍມີສິດໄດ້ຮັບການທົດແທນຄືນໃນເວລາແບ່ງປັນສິນສົມສ້າງ.

## ສ. ສັນຍາຢືມຊັບສິ່ງຂອງໄປໃຊ້

**ມາດຕາ 58. ສັນຍາຢືມຊັບສິ່ງຂອງໄປໃຊ້**

ສັນຍາຢືມຊັບສິ່ງຂອງໄປໃຊ້ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ໃຫ້ຢືມ ໄດ້ມອບຊັບສິ່ງຂອງ ໃຫ້ຜູ້ຢືມ ໄປໃຊ້ໂດຍບໍ່ຄິດຄ່າ ແລະ ຜູ້ຢືມ ຕ້ອງສົ່ງຊັບສິ່ງຂອງດັ່ງກ່າວຄືນ ໃຫ້ແກ່ເຈົ້າຂອງຊັບ ໃນສະພາບເດີມ ຕາມກຳນົດເວລາທີ່ໄດ້ຕົກລົງກັນ.

**ມາດຕາ 59. ຄວາມຮັບຜິດຊອບຂອງຜູ້ຢືມ**

ໃນກໍລະນີທີ່ຊັບສິ່ງຂອງ ຫາກຖືກເສຍຫາຍ ຫລື ເປ່ເພ ໃນເວລາທີ່ຢືມໄປໃຊ້ນັ້ນ ຜູ້ຢືມ ຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍດັ່ງກ່າວ ເວັ້ນເສັຍແຕ່ໄດ້ຕົກລົງກັນໄວ້ຢ່າງອື່ນ.

ຖ້າວ່າຜູ້ຢືມ ຫາກບໍ່ມີຄວາມສາມາດສົ່ງຊັບສິ່ງຂອງທີ່ຢືມໄປໃຊ້ນັ້ນຄືນ ຫລື ເຮັດໃຫ້ຊັບສິ່ງຂອງນັ້ນໃຊ້ການບໍ່ໄດ້ ຜູ້ກ່ຽວ ອາດຈະໃຊ້ແທນດ້ວຍເງິນ ຫລື ດ້ວຍຊັບສິ່ງຂອງອື່ນ ຕາມການເຫັນດີຂອງຜູ້ໃຫ້ຢືມ ແລະ ຕາມລາຄາໃນທ້ອງຕະຫລາດໃນເວລານັ້ນ.

ຜູ້ຢືມ ບໍ່ມີສິດເອົາຊັບສິ່ງຂອງ ທີ່ຢືມມານັ້ນ ໃຫ້ຜູ້ອື່ນຢືມຕໍ່.

## ຂ. ສັນຍາເຊົ່າຊັບສິ່ງຂອງ

ມາດຕາ 60(ປັບປຸງ). **ສັນຍາເຊົ່າຊັບສິ່ງຂອງ**

ສັນຍາເຊົ່າຊັບສິ່ງຂອງ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ໃຫ້ເຊົ່າ ໄດ້ມອບຊັບສິ່ງຂອງທີ່ເປັນກຳມະສິດຂອງຕົນໃຫ້ຜູ້ເຊົ່ານຳໃຊ້ຊົ່ວຄາວ ແລະ ຜູ້ເຊົ່າ ຕ້ອງນຳໃຊ້ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບສັນຍາ ແລະ ຄຸນປະໂຫຍດຂອງຊັບສິ່ງຂອງທີ່ເຊົ່າ, ຈ່າຍຄ່າເຊົ່າຕາມລາຄາ ແລະ ກຳນົດເວລາທີ່ໄດ້ຕົກລົງກັນ.

ສັນຍາເຊົ່າຊັບສິ່ງຂອງ ອາດຈະເຮັດຂຶ້ນໂດຍບໍ່ມີກຳນົດເວລາ. ໃນກໍລະນີນີ້ ຜູ້ໃຫ້ເຊົ່າ ຫລື ຜູ້ເຊົ່າ ມີສິດຍົກເລີກສັນຍາໄດ້ທຸກເວລາ ແຕ່ຕ້ອງແຈ້ງໃຫ້ຄູ່ສັນຍາຊາບລ່ວງຫນ້າກ່ອນ ສາມເດືອນ ສຳລັບອະສັງຫາລິມະຊັບ ເຊັ່ນ ທີ່ດິນ, ເຮືອນ, ອາຄານ ແລະ ຫນຶ່ງເດືອນ ສຳລັບສັງຫາລິມະຊັບ ເຊັ່ນ: ລົດ, ເຮືອ, ສັດ.

ສຳລັບການເຊົ່າທີ່ດິນປູກຝັງ ໃຫ້ແຈ້ງຍົກເລີກສັນຍາໃນທ້າຍລະດູເກັບກ່ຽວ ຫລື ກ່ອນເລີ່ມລະດູປູກຝັງໃຫມ່.

ກ່ອນຈະມອບຊັບສິ່ງຂອງໃຫ້ເຊົ່ານັ້ນ ຜູ້ໃຫ້ເຊົ່າ ຕ້ອງແຈ້ງຈຸດບົກພ່ອງ ຫລື ຈຸດພິເສດຂອງຊັບສິ່ງຂອງນັ້ນ ໃຫ້ຜູ້ເຊົ່າຊາບ.

ໃນກໍລະນີທີ່ຜູ້ໃຫ້ເຊົ່າ ຫາກບໍ່ໄດ້ແຈ້ງຈຸດບົກພ່ອງ ຫລື ຈຸດພິເສດຂອງຊັບສິ່ງຂອງນັ້ນແລ້ວ ຖ້າຫາກມີການເສັຍຫາຍ ຫລື ເປ່ເພ ຍ້ອນການບໍ່ໄດ້ແຈ້ງນັ້ນ ຜູ້ເຊົ່າ ກໍຈະບໍ່ມີຄວາມຮັບຜິດຊອບແຕ່ຢ່າງໃດ.

ມາດຕາ 61. **ການຈ່າຍຄ່າເຊົ່າຊັບສິ່ງຂອງ**

ໃນການເຊົ່າຊັບສິ່ງຂອງນັ້ນ ຜູ້ເຊົ່າ ອາດຈະຈ່າຍເງິນຄ່າເຊົ່າ ເປັນມື້, ເປັນອາທິດ, ເປັນເດືອນ, ເປັນປີ ຫລື ຈ່າຍລ່ວງຫນ້າກ່ອນກໍໄດ້. ໃນກໍລະນີທີ່ຜູ້ເຊົ່າ ໄດ້ຈ່າຍລ່ວງຫນ້າໄປແລ້ວ ຫາກມີການຍົກເລີກສັນຍາກ່ອນກຳນົດເວລາ ຜູ້ໃຫ້ເຊົ່າ ຕ້ອງສົ່ງເງິນຄ່າເຊົ່າສ່ວນທີ່ເຫລືອ ທີ່ໄດ້ຈ່າຍລ່ວງຫນ້ານັ້ນຄືນ ແລະ ຜູ້ກ່ຽວ ກໍມີສິດທວງເອົາຄ່າເສັຍຫາຍ ຈາກຜູ້ເຊົ່າ ທີ່ໄດ້ລະເມີດສັນຍານັ້ນໄດ້.

ໃນກໍລະນີທີ່ຜູ້ໃຫ້ເຊົ່າ ຫາກລະເມີດສັນຍາ ຜູ້ເຊົ່າມີສິດທວງເອົາເງິນຄ່າເຊົ່າສ່ວນທີ່ເຫລືອ ທີ່ໄດ້ຈ່າຍລ່ວງຫນ້າໄປແລ້ວນັ້ນ ພ້ອມທັງຄ່າເສັຍຫາຍຈາກຜູ້ໃຫ້ເຊົ່າ ອີກດ້ວຍ.

ມາດຕາ 62. **ການນຳໃຊ້ ແລະ ການສ້ອມແປງຊັບສິ່ງຂອງທີ່ເຊົ່າ**

ຜູ້ເຊົ່າ ຕ້ອງນຳໃຊ້ຊັບສິ່ງຂອງທີ່ເຊົ່ານັ້ນໃຫ້ສອດຄ່ອງກັບສັນຍາ ແລະ ຄຸນປະໂຫຍດຂອງຊັບສິ່ງຂອງທີ່ເຊົ່າ, ຄຸ້ມຄອງ, ຮັກສາໃຫ້ຢູ່ໃນສະພາບອັນເຫມາະສົມ ແລະ ສົ່ງຊັບສິ່ງຂອງນັ້ນຄືນແກ່ຜູ້ໃຫ້ເຊົ່າໃນສະພາບເດີມ ພາຍຫລັງທີ່ສັນຍານັ້ນໄດ້ສິ້ນສຸດລົງ. ຜູ້ເຊົ່າ ຕ້ອງຮັບຜິດຊອບຕໍ່ການເສັຍຫາຍ ຫລື ເປ່ເພ ທີ່ເນື່ອງມາຈາກຄວາມຜິດຂອງຜູ້ກ່ຽວ.

ໃນການນຳໃຊ້ຊັບສິ່ງຂອງທີ່ເຊົ່ານັ້ນ ຖ້າຫາກມີການສ້ອມແປງນ້ອຍ ເຊັ່ນ: ແປງກະແຈ, ຢາເຮືອນຮົ່ວ, ຈອດຢາງລົດ ກໍຈະຕົກເປັນພາລະຂອງຜູ້ເຊົ່າ. ສ່ວນການສ້ອມແປງໃຫຍ່ ເຊັ່ນ: ຮື້ຫລັງຄາເຮືອນ, ຍົກຈັກລົດ ນັ້ນ ກໍຈະຕົກເປັນພາລະຂອງຜູ້ໃຫ້ເຊົ່າ.

ຖ້າວ່າຜູ້ເຊົ່າ ຫາກໄດ້ຈ່າຍຄ່າສ້ອມແປງໃຫຍ່ດ້ວຍທຶນຂອງຕົນເອງ ຕາມການເຫັນດີຂອງຜູ້ໃຫ້ເຊົ່າ ຜູ້ເຊົ່າ ມີສິດທວງເອົາຄ່າໃຊ້ຈ່າຍດັ່ງກ່າວ ຈາກຜູ້ໃຫ້ເຊົ່າ ຫລື ຈະຄິດໄລ່ເປັນຄ່າເຊົ່າ ກໍໄດ້.

ໃນກໍລະນີທີ່ຜູ້ເຊົ່າ ໄດ້ສະເຫນີໃຫ້ມີການສ້ອມແປງໃຫຍ່ແລ້ວ ແຕ່ຍັງບໍ່ໄດ້ສ້ອມແປງ ທັງໆທີ່ຜູ້ໃຫ້ເຊົ່າ ມີຄວາມສາມາດ ຜູ້ເຊົ່າມີສິດຍົກເລີກສັນຍາໄດ້ ແລະ ທວງເອົາຄ່າເຊົ່າທີ່ໄດ້ຈ່າຍລ່ວງຫນ້ານັ້ນຄືນ.

### ມາດຕາ 63(ປັບປຸງ). ການປ່ຽນເຈົ້າກຳມະສິດໃນຊັບສິ່ງຂອງທີ່ເຊົ່າ

ໃນກໍລະນີທີ່ຜູ້ໃຫ້ເຊົ່າ ຫາກໄດ້ມອບ ຫລື ຂາຍຊັບສິ່ງຂອງທີ່ເຊົ່ານັ້ນ ໃຫ້ແກ່ບຸກຄົນອື່ນ ສັນຍາເຊົ່າຊັບສິ່ງຂອງນັ້ນ ກໍຍັງມີຜົນໃຊ້ໄດ້ ສຳລັບຜູ້ຮັບ ຫລື ຜູ້ຊື້ ທີ່ເປັນເຈົ້າກຳມະສິດໃຫມ່ ແຕ່ຜູ້ໃຫ້ເຊົ່າຕ້ອງແຈ້ງໃຫ້ແກ່ເຈົ້າກຳມະສິດໃຫມ່ຊາບກ່ອນ ວ່າຊັບສິ່ງຂອງດັ່ງກ່າວ ຍັງຢູ່ໃນການນຳໃຊ້ຂອງຜູ້ເຊົ່າຢູ່.

### ມາດຕາ 64(ໃຫມ່). ການໃຫ້ເຊົ່າຕໍ່

ຜູ້ເຊົ່າ ສາມາດເອົາຊັບສິ່ງຂອງທີ່ເຊົ່າ ໃຫ້ບຸກຄົນອື່ນເຊົ່າຕໍ່ໄດ້ ດ້ວຍຄວາມເຫັນດີຂອງຜູ້ໃຫ້ເຊົ່າ ແຕ່ການໃຫ້ເຊົ່າຕໍ່ ຕ້ອງຢູ່ໃນຂອບເຂດຂອງກຳນົດເວລາ ແລະ ເງື່ອນໄຂຂອງສັນຍາເຊົ່າເບື້ອງຕົ້ນ.

## ຍ. ສັນຍາຝາກຊັບສິ່ງຂອງ

### ມາດຕາ 65. ສັນຍາຝາກຊັບສິ່ງຂອງ

ສັນຍາຝາກຊັບສິ່ງຂອງ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ຝາກ ໄດ້ມອບຊັບສິ່ງຂອງໃຫ້ແກ່ຜູ້ຮັບຝາກ ເພື່ອປົກປັກຮັກສາ ແລະ ຜູ້ຮັບຝາກ ຕ້ອງສົ່ງຊັບສິ່ງຂອງດັ່ງກ່າວຄືນໃນສະພາບເດີມ ໃຫ້ແກ່ຜູ້ຝາກ ເມື່ອຜູ້ກ່ຽວຫາກທວງຖາມເອົາ.

ໃນການຝາກຊັບສິ່ງຂອງນັ້ນ ອາດຈະມີການຈ່າຍ ຫລື ບໍ່ມີການຈ່າຍຄ່າຝາກ ກໍໄດ້ ແລ້ວແຕ່ຄູ່ສັນຍາ ຈະຕົກລົງກັນ ຫລື ຕາມລະບຽບການສະເພາະ.

ໃນກໍລະນີທີ່ການຝາກຊັບສິ່ງຂອງ ຫາກມີກຳນົດເວລາ ຜູ້ຮັບຝາກ ບໍ່ມີສິດຈະສົ່ງຊັບທີ່ຝາກນັ້ນຄືນກ່ອນກຳນົດເວລາໄດ້ ເວັ້ນເສຍແຕ່ໃນກໍລະນີຈຳເປັນ ແຕ່ຜູ້ຝາກ ຈະເອົາຊັບສິ່ງຂອງທີ່ຝາກນັ້ນຄືນກ່ອນກຳນົດເວລາ ກໍໄດ້.

ຖ້າວ່າການຝາກຊັບສິ່ງຂອງ ຫາກບໍ່ມີກຳນົດເວລາ ຜູ້ຝາກ ຈະເອົາຊັບສິ່ງຂອງທີ່ຝາກນັ້ນຄືນໃນເວລາໃດກໍໄດ້ ແລະ ຜູ້ຮັບຝາກ ກໍມີສິດທວງໃຫ້ຜູ້ຝາກ ຮັບເອົາຊັບສິ່ງຂອງຂອງຕົນຄືນ ໃນເວລາອັນເໝາະສົມ.

ການຈ່າຍຄ່າຝາກຊັບສິ່ງຂອງນັ້ນ ຈະຄິດໄລ່ຕາມກຳນົດເວລາຝາກຕົວຈິງ ເວັ້ນເສຍແຕ່ຫາກໄດ້ຕົກລົງກັນຢ່າງອື່ນໄວ້ໃນສັນຍາ.

**ມາດຕາ 66(ປັບປຸງ). ພັນທະຂອງຜູ້ຮັບຝາກ**

ຜູ້ຮັບຝາກ ມີພັນທະປົກປັກຮັກສາບໍ່ໃຫ້ຊັບສິ່ງຂອງ ທີ່ຝາກນັ້ນຖືກເສຍຫາຍ, ເປ່ເພ ຫລື ເສຍຄຸນນະພາບ, ສົ່ງຊັບສິ່ງຂອງທີ່ຝາກນັ້ນຄືນໃຫ້ແກ່ຜູ້ຝາກໃນສະພາບເດີມ.

ຜູ້ຮັບຝາກ ບໍ່ມີສິດນຳໃຊ້ຊັບສິ່ງຂອງທີ່ຝາກນັ້ນ ຫລື ມອບຊັບສິ່ງຂອງດັ່ງກ່າວ ໃຫ້ຜູ້ອື່ນປົກປັກຮັກສາແທນ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຜູ້ຝາກເທົ່ານັ້ນ. ຖ້າວ່າຊັບສິ່ງຂອງທີ່ຝາກ ຫາກເກີດໝາກຜົນຢ່າງໃດໜຶ່ງຂຶ້ນ ໝາກຜົນທີ່ເກີດນັ້ນ ກໍຈະຕົກເປັນຂອງຜູ້ຝາກ.

ເມື່ອຊັບສິ່ງຂອງທີ່ຝາກ ຫາກມີການເສຍຫາຍ, ເປ່ເພ ຫລື ເສຍຄຸນນະພາບແລ້ວ ຜູ້ຮັບຝາກຕ້ອງຮັບຜິດຊອບຕໍ່ການເສຍຫາຍດັ່ງກ່າວ ເວັ້ນເສຍແຕ່ການເສຍຫາຍນັ້ນ ຫາກເກີດຂຶ້ນຍ້ອນເຫດສຸດວິໄສເທົ່ານັ້ນ.

ໃນກໍລະນີທີ່ມີເຫດການ ຫລື ສະພາບການໃດໜຶ່ງ ທີ່ຈະກໍ່ຄວາມເສຍຫາຍແກ່ຊັບສິ່ງຂອງທີ່ຝາກນັ້ນ ຜູ້ຮັບຝາກ ຕ້ອງແຈ້ງໃຫ້ຜູ້ຝາກ ຊາບໃນທັນໃດ. ຖ້າວ່າຜູ້ຮັບຝາກ ຫາກບໍ່ແຈ້ງແລ້ວ ຜູ້ກ່ຽວ ກໍຈະຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ.

**ມາດຕາ 67. ພັນທະຂອງຜູ້ຝາກ**

ຜູ້ຝາກ ມີພັນທະແຈ້ງຈຸດບົກພ່ອງ ຫລື ຈຸດພິເສດຂອງຊັບສິ່ງຂອງທີ່ຝາກນັ້ນ ໃຫ້ຜູ້ຮັບຝາກຊາບແລ້ວ ຄູ່ສັນຍາທັງສອງຝ່າຍ ຈຶ່ງພ້ອມກັນກວດກາເບິ່ງສະພາບຕົວຈິງຂອງຊັບສິ່ງຂອງນັ້ນ.

ຖ້າວ່າຜູ້ຝາກ ຫາກບໍ່ໄດ້ແຈ້ງຈຸດບົກພ່ອງ ຫລື ຈຸດພິເສດຂອງຊັບສິ່ງຂອງນັ້ນ ໃຫ້ຜູ້ຮັບຝາກຊາບ ຊຶ່ງພາໃຫ້ມີການເສຍຫາຍແກ່ຜູ້ຮັບຝາກ ຫລື ຊັບສິ່ງຂອງທີ່ຝາກນັ້ນແລ້ວ ຜູ້ຝາກຕ້ອງຮັບຜິດຊອບຕໍ່ການເສຍຫາຍທີ່ເກີດຂຶ້ນ.

ຜູ້ຝາກ ຕ້ອງຮັບເອົາຊັບສິ່ງຂອງຕາມກຳນົດເວລາ ແລະ ຈ່າຍຄ່າຝາກ ຖ້າຫາກວ່າມີການຕົກລົງກັນ.

ຖ້າວ່າຄູ່ສັນຍາ ຫາກໄດ້ຕົກລົງຈ່າຍຄ່າຝາກ ນັບແຕ່ວັນໄດ້ຕົກລົງກັນເປັນຕົ້ນໄປ ການຊັກຊ້າໃນການມອບຊັບສິ່ງຂອງທີ່ຝາກນັ້ນ ກໍຈະຕົກເປັນຄວາມຮັບຜິດຊອບຂອງຜູ້ຝາກເອງ. ໃນກໍລະນີ ທີ່ຜູ້ຝາກ ຫາກຊັກຊ້າໃນການຮັບເອົາຊັບສິ່ງຂອງນັ້ນຄືນ ຜູ້ກ່ຽວ ຕ້ອງຮັບຜິດຊອບຈ່າຍຄ່າຝາກ ຕາມຈຳນວນວັນຊັກຊ້ານັ້ນຕື່ມ.

ເມື່ອຜູ້ຮັບຝາກ ຫາກໄດ້ໃຊ້ຈ່າຍໃນການປົກປັກຮັກສາຊັບສິ່ງຂອງນັ້ນແລ້ວ ຜູ້ຝາກ ຕ້ອງທົດແທນຄ່າໃຊ້ຈ່າຍນັ້ນຄືນ.

ໃນກໍລະນີ ຊັບສິ່ງຂອງທີ່ຝາກນັ້ນ ຫາກມີລັກສະນະປ່ຽນຮູບ, ເສັຍຄຸນນະພາບໄວ ແລະ ຜູ້ຝາກບໍ່ມາຮັບເອົາຕາມກຳນົດເວລາແລ້ວ ຜູ້ຮັບຝາກ ມີສິດຂາຍຊັບສິ່ງຂອງດັ່ງກ່າວ ແລະ ຫັກເອົາເງິນຄ່າຝາກ ລວມທັງຄ່າໃຊ້ຈ່າຍໃນການຂາຍ ຖ້າຫາກມີ, ສ່ວນເງິນທີ່ຍັງເຫລືອນັ້ນ ຕ້ອງສົ່ງຄືນໃຫ້ແກ່ຜູ້ຝາກ. ຖ້າວ່າຜູ້ຮັບຝາກ ຫາກຂາຍຊັບສິ່ງຂອງທີ່ຝາກນັ້ນ ດ້ວຍຄວາມບໍ່ບໍລິສຸດໃຈແລ້ວ ຜູ້ກ່ຽວກໍຈະມີຄວາມຜິດ ໃນສະຖານຍັກຍອກຊັບ.

## ໑. ສັນຍາມອບໝາຍ

### ມາດຕາ 68. ສັນຍາມອບໝາຍ

ສັນຍາມອບໝາຍ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ຮັບມອບໝາຍ ຕ້ອງເຮັດສິ່ງໃດໜຶ່ງ ໃນນາມ ແລະ ດ້ວຍທຶນຂອງຜູ້ມອບໝາຍ, ຜູ້ມອບໝາຍ ມີພັນທະຈ່າຍຄ່າຕອບແທນໃຫ້ຜູ້ຮັບມອບໝາຍ ຖ້າຫາກວ່າໄດ້ກຳນົດໄວ້ໃນສັນຍາ ຫລື ກົດໝາຍ.

ຜູ້ຮັບມອບໝາຍ ຈະເຮັດສິ່ງໃດໜຶ່ງ ຕາມການມອບໝາຍໄດ້ ກໍຕໍ່ເມື່ອຫາກມີໃບມອບສັນທະເທົ່ານັ້ນ ເວັ້ນເສັຍແຕ່ໄດ້ເຮັດສິ່ງໃດໜຶ່ງ ທີ່ມີຄວາມສຳຄັນເລັກໜ້ອຍ.

ການມອບໝາຍ ບໍ່ໃຫ້ເກີນ ສາມ ປີ. ຖ້າວ່າບໍ່ໄດ້ກຳນົດເວລາໄວ້ ການມອບໝາຍ ກໍຈະມີຜົນບັງຄັບໃຊ້ໄດ້ພາຍໃນກຳນົດ ໜຶ່ງປີ ນັບແຕ່ວັນໄດ້ເຮັດໃບມອບສັນທະນັ້ນເປັນຕົ້ນໄປ.

ພໍ່ແມ່ ຫລື ຜູ້ປົກຄອງ ເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ສິບແປດ ປີ, ຄົນບ້າເສັຍຈິດ, ຜົວ ຫລື ເມັຍ ຈະເຮັດສິ່ງໃດໜຶ່ງແທນກັນ ໂດຍບໍ່ມີໃບມອບສັນທະ ກໍໄດ້ ແຕ່ຫາກໃຫ້ມີເອກະສານຢັ້ງຢືນກ່ຽວກັບສາຍພົວພັນຄອບຄົວລະຫວ່າງບຸກຄົນດັ່ງກ່າວ.

### ມາດຕາ 69. ພັນທະຂອງຜູ້ຮັບມອບໝາຍ

ຜູ້ຮັບມອບໝາຍ ມີພັນທະປະຕິບັດຕາມການມອບໝາຍດ້ວຍຕົນເອງ ຢ່າງສອດຄ່ອງກັບຄຳແນະນຳຂອງຜູ້ມອບໝາຍ ແລະ ປະຕິບັດດ້ວຍຄວາມຈິງໃຈເໝືອນດັ່ງວຽກງານຂອງຕົນເອງ. ຖ້າວ່າຜູ້ຮັບມອບໝາຍ ຫາກບໍ່ສາມາດປະຕິບັດດ້ວຍຕົນເອງໄດ້ ຍ້ອນສາເຫດພາວະວິໄສແລ້ວ ຜູ້ກ່ຽວກໍມີສິດມອບການມອບໝາຍນັ້ນ ໃຫ້ບຸກຄົນອື່ນປະຕິບັດແທນຕົນ ກໍໄດ້ ແຕ່ຕ້ອງໄດ້ແຈ້ງກ່ຽວກັບບຸກຄະລິກກະພາບ, ຄວາມສາມາດຂອງບຸກຄົນທີ່ຈະປະຕິບັດແທນນັ້ນ ໃຫ້ຜູ້ມອບໝາຍຊາບໃນທັນໃດເພື່ອຂໍຄວາມເຫັນດີຈາກຜູ້ກ່ຽວ, ຖ້າບໍ່ດັ່ງນັ້ນ ຜູ້ຮັບມອບໝາຍ ກໍຈະຮັບຜິດຊອບຕໍ່ການເສັຍຫາຍທີ່ເກີດຂຶ້ນແກ່ຜູ້ມອບໝາຍ ຍ້ອນການກະທຳຂອງບຸກຄົນນັ້ນ. ຜູ້ຮັບມອບໝາຍ ຍັງມີພັນທະ ລາຍງານ ແລະ ມອບຊັບສິ່ງຂອງ, ເງິນ ຫລື ເອກະສານທີ່ຮັບຈາກການປະຕິບັດການມອບໝາຍນັ້ນ ໃຫ້ຜູ້ມອບໝາຍໂດຍທັນທີ.

ໃນກໍລະນີທີ່ຜູ້ຮັບມອບໝາຍ ຫາກໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ມອບໝາຍ ໃນການປະຕິບັດວຽກງານ ໂດຍບໍ່ສອດຄ່ອງກັບຄຳແນະນຳ ຫລື ເກີນຂອບເຂດຂອງການມອບໝາຍນັ້ນ ຜູ້ກ່ຽວຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍໃຫ້ແກ່ຜູ້ມອບໝາຍ.

### ມາດຕາ 70. ພັນທະຂອງຜູ້ມອບໝາຍ

ຜູ້ມອບໝາຍ ຕ້ອງສະໜອງຊັບສິ່ງຂອງທີ່ຈຳເປັນ ໃຫ້ແກ່ຜູ້ຮັບມອບໝາຍ ເພື່ອປະຕິບັດວຽກງານຂອງຕົນ, ຕ້ອງຮັບຮູ້ວຽກງານທີ່ຜູ້ຮັບມອບໝາຍ ໄດ້ປະຕິບັດມາແລ້ວໃນຂອບເຂດການມອບໝາຍຂອງຕົນ, ຕ້ອງຈ່າຍຄ່າຕອບແທນໃຫ້ຜູ້ຮັບມອບໝາຍ ໃນກໍລະນີທີ່ໄດ້ກຳນົດໄວ້ໃນສັນຍາ ແລະ ຮັບຮູ້ການໃຊ້ຈ່າຍຂອງຜູ້ຮັບມອບໝາຍໃນການປະຕິບັດວຽກງານ. ຜູ້ມອບໝາຍ ມີສິດບໍ່ຮັບເອົາວຽກງານທີ່ຜູ້ຮັບມອບໝາຍໄດ້ປະຕິບັດ ໂດຍບໍ່ສອດຄ່ອງກັບຄຳແນະນຳ ຫລື ເກີນຂອບເຂດຂອງການມອບໝາຍ.

ຖ້າວ່າຜູ້ມອບໝາຍ ຫາກບໍ່ຮັບຮູ້ວຽກງານທີ່ຜູ້ຮັບມອບໝາຍໄດ້ປະຕິບັດ ໂດຍສອດຄ່ອງກັບການມອບໝາຍ ລວມທັງການໃຊ້ຈ່າຍໃນການປະຕິບັດວຽກງານນັ້ນ ຜູ້ມອບໝາຍ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທັງໝົດ.

## ໓. ສັນຍາບໍລິການ

### ມາດຕາ 71(ປັບປຸງ). ສັນຍາບໍລິການ

ສັນຍາບໍລິການ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ບໍລິການ ຕ້ອງຮັບໃຊ້, ເຮັດ ຫລື ສ້າງສິ່ງໃດໜຶ່ງ ຫລື ໃຫ້ຄຳປຶກສາ ແກ່ຜູ້ໃຊ້ບໍລິການ ແລະ ຜູ້ໃຊ້ບໍລິການ ຕ້ອງຈ່າຍຄ່າບໍລິການນັ້ນ ຕາມລາຄາທີ່ໄດ້ຕົກລົງກັນ.

### ມາດຕາ 72(ປັບປຸງ). ປະເພດສັນຍາບໍລິການ

ສັນຍາບໍລິການ ມີ ສອງປະເພດ ຄື:

1. ສັນຍາບໍລິການທົ່ວໄປ;
2. ສັນຍາບໍລິການດ້ານວິຊາການ.

ສັນຍາບໍລິການທົ່ວໄປ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ບໍລິການຕ້ອງເຮັດ ຫລື ສ້າງສິ່ງໃດໜຶ່ງທີ່ແນ່ນອນ ເຊັ່ນ: ສ້ອມແປງ, ຕັດຜົມ, ຫຍິບເຄື່ອງນຸ່ງຫົ່ມ, ຮັບໃຊ້ໃນການກິນດື່ມ.

ສັນຍາບໍລິການດ້ານວິຊາການ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ບໍລິການ ຕ້ອງໃຫ້ການບໍລິການ ໃນການ ຄົ້ນຄວ້າ, ວິເຄາະ, ວິໄຈ, ສະໜອງຂໍ້ມູນ, ໃຫ້ ຄຳປຶກສາ, ຄຳແນະນຳ, ສ້າງໂປຣແກຣມ, ສ້າງບົດລາຍງານ ແລະ ອື່ນໆ ໃຫ້ຖືກຕ້ອງຕາມຫລັກວິຊາການ.

ສັນຍາບໍລິການດ້ານວິຊາການ ຕ້ອງເຮັດເປັນລາຍລັກອັກສອນ.

**ມາດຕາ 73(ໃໝ່). ສິດ ແລະ ພັນທະຂອງຜູ້ບໍລິການ**

ຜູ້ບໍລິການ ມີສິດໄດ້ຮັບຄ່າບໍລິການ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

ຜູ້ບໍລິການ ມີພັນທະ ດັ່ງນີ້:

1. ນຳໃຊ້ອຸປະກອນທີ່ດີ, ມີຄຸນນະພາບ ຖືກຕ້ອງຕາມຫລັກວິຊາຊີບ ແລະ ຄວາມຕ້ອງການຂອງຜູ້ໃຊ້ບໍລິການ;
2. ປົກປັກຮັກສາວັດຖຸສິ່ງຂອງ ຂອງຜູ້ໃຊ້ບໍລິການ;
3. ມອບວັດຖຸສິ່ງຂອງ ຫລື ໝາກຜົນຂອງການບໍລິການ ທີ່ຕົນໄດ້ເຮັດ ຫລື ສ້າງສຳເລັດ ຕາມກຳນົດເວລາ ແລະ ມີຄຸນນະພາບ ໃຫ້ຜູ້ໃຊ້ບໍລິການ;
4. ຮັກສາຄວາມລັບຂອງຜູ້ໃຊ້ບໍລິການ.

**ມາດຕາ 74(ໃໝ່). ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ມີສິດ ດັ່ງນີ້:

1. ທວງເອົາສິ່ງ ທີ່ຕົນນຳໄປໃຊ້ບໍລິການ;
2. ສະເໜີໃຫ້ຜູ້ບໍລິການ ປັບປຸງແກ້ໄຂຈຸດບົກພ່ອງ;
3. ບໍ່ຮັບເອົາການບໍລິການທີ່ບໍ່ໄດ້ ຕາມການຕົກລົງ;
4. ທວງເອົາຄ່າເສັຍຫາຍທີ່ເກີດຂຶ້ນ ເນື່ອງຈາກການລະເມີດສັນຍາຂອງຜູ້ບໍລິການ;
5. ປ່ຽນຜູ້ບໍລິການຄົນໃໝ່ ແຕ່ຕ້ອງໄດ້ຈ່າຍຄ່າບໍລິການໃຫ້ຜູ້ບໍລິການຄົນເກົ່າ ໃນສິ່ງທີ່ໄດ້ເຮັດ ຫລື ສ້າງແລ້ວ.

ຜູ້ໃຊ້ບໍລິການ ມີພັນທະ ດັ່ງນີ້:

1. ສະໜອງວັດຖຸອຸປະກອນ ຫລື ຂໍ້ມູນທີ່ຈຳເປັນໃຫ້ແກ່ຜູ້ບໍລິການ;
2. ຮັບເອົາວັດຖຸສິ່ງຂອງ ຫລື ໝາກຜົນຂອງການບໍລິການ ທີ່ຜູ້ບໍລິການ ໄດ້ເຮັດ ຫລື ສ້າງສຳເລັດແລ້ວ ແລະ ຈ່າຍຄ່າບໍລິການ.

## ຖ. ສັນຍາຮັບເໝົາກໍ່ສ້າງ

**ມາດຕາ 75(ປັບປຸງ). ສັນຍາຮັບເໝົາກໍ່ສ້າງ**

ສັນຍາຮັບເໝົາກໍ່ສ້າງ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ຮັບເໝົາ ຕ້ອງກໍ່ສ້າງສິ່ງໃດໜຶ່ງອັນແນ່ນອນ ຕາມຈຸດປະສົງຂອງເຈົ້າຂອງໂຄງການ ດ້ວຍວັດຖຸປະກອນຂອງເຈົ້າຂອງໂຄງການ ຫລື ຂອງຕົນເອງ, ສ່ວນເຈົ້າຂອງໂຄງການນັ້ນ ຕ້ອງຮັບເອົາ ແລະ ຈ່າຍຄ່າສິ່ງກໍ່ສ້າງ ຊຶ່ງໄດ້ເຮັດ ແລະ ຢັ້ງຢືນຜົນສຳເລັດຮ່ວມກັນ ແລ້ວ.

ຜູ້ຮັບເໝົາ ມີສິດສະເໜີໃຫ້ເຈົ້າຂອງໂຄງການ ຮູ້ວ່າຕົນບໍ່ສາມາດປະຕິບັດຄໍາແນະນໍາ ຫລື ນໍາໃຊ້ວັດຖຸປະກອນ ຫລື ພາຫະນະ ຂອງເຈົ້າຂອງໂຄງການ ທີ່ບໍ່ໄດ້ມາດຕະຖານເຕັກນິກ.

ຖ້າວ່າເຈົ້າຂອງໂຄງການ ຫາກບໍ່ໄດ້ແກ້ໄຂພາຍໃນກໍານົດອັນເໝາະສົມແລ້ວ ຜູ້ຮັບເໝົາ ມີສິດຂໍຍົກເລີກສັນຍາ ແລະ ທວງເອົາຄ່າເສັຍຫາຍ.

ໃນກໍລະນີທີ່ວັດຖຸປະກອນ ຫລື ພາຫະນະ ຫາກເປັນຂອງເຈົ້າຂອງໂຄງການແລ້ວ ຜູ້ຮັບເໝົາຕ້ອງປົກປັກຮັກສາ ແລະ ນໍາໃຊ້ໃຫ້ຖືກຕ້ອງ. ຖ້າວ່າການນໍາໃຊ້ ຫາກບໍ່ຖືກຕ້ອງແລ້ວ ຜູ້ກ່ຽວຕ້ອງຮັບຜິດຊອບ, ນອກຈາກນີ້ ກໍຍັງມີພັນທະມອບບັນຊີກ່ຽວກັບການນໍາໃຊ້ວັດຖຸປະກອນ ແລະ ສິ່ງວັດຖຸປະກອນທີ່ຍັງເຫລືອຄືນ ໃຫ້ແກ່ເຈົ້າຂອງໂຄງການ.

ເຈົ້າຂອງໂຄງການ ມີສິດກວດກາເບິ່ງສິ່ງທີ່ໄດ້ກໍ່ສ້າງ. ຖ້າວ່າສິ່ງທີ່ໄດ້ກໍ່ສ້າງນັ້ນ ຫາກບໍ່ໄດ້ປະຕິບັດ ຫລື ປະຕິບັດບໍ່ຖືກຕ້ອງ ຕາມເງື່ອນໄຂຂອງສັນຍາ ອັນພາໃຫ້ສິ່ງກໍ່ສ້າງນັ້ນ ບໍ່ໄດ້ມາດຕະຖານເຕັກນິກ ຫລື ເປ່ເພແລ້ວ ເຈົ້າຂອງໂຄງການ ມີສິດແຈ້ງໃຫ້ຜູ້ຮັບເໝົາ ແກ້ໄຂ ຫລື ປົວແປງພາຍໃນກໍານົດເວລາອັນຄວນ ຫລື ທວງເອົາຄ່າເສັຍຫາຍ ຖ້າວ່າການໃຊ້ຈ່າຍໃນການປົວແປງນັ້ນ ຫາກເປັນວັດຖຸປະກອນ ຫລື ພາຫະນະຂອງຕົນເອງ, ນອກຈາກນີ້ ເຈົ້າຂອງໂຄງການ ອາດຈະຂໍຍົກເລີກສັນຍາ ແລະ ທວງເອົາຄ່າເສັຍຫາຍ ກໍໄດ້.

ວັດຖຸປະກອນ ຫລື ພາຫະນະ ທີ່ເຈົ້າຂອງໂຄງການເປັນຜູ້ຈັດຫາໃຫ້ນັ້ນ ຕ້ອງໃຫ້ມີຄຸນນະພາບ, ຖືກຕ້ອງ ຕາມມາດຕະຖານເຕັກນິກ ແລະ ໃຫ້ທັນ ຕາມກໍານົດເວລາ.

**ມາດຕາ 76. ການຮັບປະກັນຄຸນນະພາບຂອງສິ່ງກໍ່ສ້າງ**

ຜູ້ຮັບເໝົາ ຕ້ອງຮັບປະກັນສິ່ງກໍ່ສ້າງ ຕາມລະບຽບການຂອງການກໍ່ສ້າງ.

ພາຍຫລັງທີ່ເຈົ້າຂອງໂຄງການ ໄດ້ຮັບເອົາສິ່ງກໍ່ສ້າງແລ້ວ ຫາກຍັງເຫັນວ່າມີສິ່ງບົກພ່ອງໃນການກໍ່ສ້າງນັ້ນ ເຈົ້າຂອງໂຄງການ ມີສິດທວງໃຫ້ຜູ້ຮັບເໝົາທໍາການສ້ອມແປງຄືນ ໂດຍບໍ່ເສັຍຄ່າສ້ອມແປງແຕ່ຢ່າງໃດ ຖ້າວ່າກໍານົດເວລາຮັບປະກັນນັ້ນ ຫາກຍັງບໍ່ທັນໄດ້ສິ້ນສຸດ.

## ທ. ສັນຍາຂົນສົ່ງ

**ມາດຕາ 77(ປັບປຸງ). ສັນຍາຂົນສົ່ງ**

ສັນຍາຂົນສົ່ງ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຝ່າຍໜຶ່ງ ແມ່ນ ຜູ້ຂົນສົ່ງ ເປັນຜູ້ຮັບຜິດຊອບນໍາສົ່ງຜູ້ໂດຍສານ, ເຄື່ອງຕິດຕົວ ຫລື ວັດຖຸເຄື່ອງຂອງ, ສິນຄ້າ ໄປຮອດຈຸດໝາຍ ຫລື ຕາມຈຸດປະສົງຂອງອີກຝ່າຍໜຶ່ງ, ສ່ວນອີກຝ່າຍໜຶ່ງ ແມ່ນ ຜູ້ໂດຍສານ ຫລື ຜູ້ສົ່ງວັດຖຸເຄື່ອງຂອງ ຫລື ສິນຄ້າ ເປັນຜູ້ມີພັນທະຈ່າຍ ຄ່າໂດຍສານ ຫລື ຄ່າຂົນສົ່ງ ຕາມລາຄາທີ່ໄດ້ຕົກລົງກັນ.

ສັນຍາຂົນສົ່ງ ມີຜົນສັກສິດ ນັບແຕ່ເວລາຜູ້ຂົນສົ່ງ ຮັບເອົາຜູ້ໂດຍສານ, ເຄື່ອງຕິດຕົວ ຫລື ວັດຖຸເຄື່ອງຂອງ, ສິນຄ້າ ແລະ ສິ້ນສຸດລົງ ໃນເວລາ ຜູ້ໂດຍສານ ຮອດຈຸດຫມາຍ ພ້ອມດ້ວຍເຄື່ອງຕິດຕົວ ຫລື ເຈົ້າຂອງ ຫລື ຜູ້ມີສິດ ໄດ້ຮັບເອົາ ວັດຖຸເຄື່ອງຂອງ ຫລື ສິນຄ້າດັ່ງກ່າວແລ້ວ.

ການຂົນສົ່ງ ອາດຈະເຮັດຂຶ້ນໂດຍ ທາງບົກ, ທາງນ້ຳ ຫລື ທາງອາກາດ ແລະ ໃຫ້ປະຕິບັດຕາມລະບຽບການສະເພາະຂອງຂະແຫນງການທີ່ກ່ຽວຂ້ອງ.

### ມາດຕາ 78. **ພັນທະຂອງຜູ້ຂົນສົ່ງ**

ຜູ້ຂົນສົ່ງ ມີພັນທະສົ່ງຜູ້ໂດຍສານ ພ້ອມດ້ວຍເຄື່ອງຕິດຕົວ ໄປຮອດຈຸດຫມາຍຢ່າງປອດໄພ, ນຳສົ່ງ ວັດຖຸເຄື່ອງຂອງ ຫລື ສິນຄ້າ ທີ່ມອບຫມາຍໃຫ້ຂົນສົ່ງນັ້ນ ໄປຮອດຈຸດຫມາຍ ແລະ ມອບໃຫ້ຜູ້ມີສິດຮັບເອົາວັດຖຸເຄື່ອງຂອງ ຫລື ສິນຄ້າດັ່ງກ່າວ ຕາມຈຳນວນ ແລະ ຄຸນນະພາບ ທີ່ຕົນໄດ້ຮັບຢູ່ຕົ້ນທາງ.

ໃນກໍລະນີທີ່ເກີດອຸປະຕິເຫດ ຜູ້ຂົນສົ່ງ ຕ້ອງຮັບຜິດຊອບຕໍ່ຜູ້ໂດຍສານທີ່ໄດ້ຮັບບາດເຈັບ ຫລື ເສັຍຊີວິດ, ຮັບຜິດຊອບຕໍ່ເຄື່ອງຕິດຕົວ ຫລື ວັດຖຸເຄື່ອງຂອງ, ສິນຄ້າ ທີ່ໄດ້ເສັຍຫາຍ ຫລື ເປ່ເພ ຈາກການຂົນສົ່ງ ເວັ້ນເສັຍແຕ່ກໍລະນີທີ່ມີເຫດສຸດວິໄສ.

### ມາດຕາ 79(ປັບປຸງ). **ຄ່າໂດຍສານ ແລະ ຄ່າຂົນສົ່ງ**

ຜູ້ໂດຍສານ ຈະຈ່າຍຄ່າໂດຍສານ ກ່ອນ ຫລື ຫລັງ ການເດີນທາງກໍໄດ້ ຕາມລາຄາເປັນສາຍທາງ ທີ່ລັດໄດ້ກຳນົດ ໃນແຕ່ລະໄລຍະ ຫລື ຕາມການຕົກລົງຂອງຄູ່ສັນຍາ.

ເຈົ້າຂອງວັດຖຸເຄື່ອງຂອງ ຫລື ເຈົ້າຂອງສິນຄ້າ ຈະຈ່າຍຄ່າຂົນສົ່ງ ກ່ອນ ຫລື ຫລັງ ການຂົນສົ່ງກໍໄດ້ ຕາມທີ່ໄດ້ຕົກລົງກັນ.

## ນ. ສັນຍາຮຸ້ນສ່ວນ

### ມາດຕາ 80(ປັບປຸງ). **ສັນຍາຮຸ້ນສ່ວນ**

ສັນຍາຮຸ້ນສ່ວນ ແມ່ນ ການຕົກລົງລະຫວ່າງສອງຄົນ ຫລື ຫລາຍຄົນ ເພື່ອເອົາເງິນ ຫລື ຊັບສິ່ງຂອງ ຫລື ແຮງງານ ມາຮ່ວມກັນດຳເນີນທຸລະກິດໃດໜຶ່ງ ເພື່ອແບ່ງປັນຜົນປະໂຫຍດ ຫລື ຮັບຜິດຊອບຕໍ່ຫນີ້ສິນ.

ຄູ່ສັນຍາ ຈະຕົກລົງກັນຢ່າງໃດກໍໄດ້ ໂດຍສອດຄ່ອງກັບກົດຫມາຍວ່າດ້ວຍວິສາຫະກິດ ແລະ ລະບຽບກົດຫມາຍອື່ນ.

### ມາດຕາ 81(ປັບປຸງ). **ການສິ້ນສຸດຂອງສັນຍາຮຸ້ນສ່ວນ**

ສັນຍາຮຸ້ນສ່ວນ ອາດຈະສິ້ນສຸດລົງໃນກໍລະນີໃດໜຶ່ງ ດັ່ງນີ້:

1. ວັດຖຸປະສົງຂອງສັນຍາຮຸ້ນສ່ວນ ໄດ້ຮັບການປະຕິບັດ ສຳເລັດແລ້ວ;
2. ກຳນົດເວລາຂອງສັນຍາຮຸ້ນສ່ວນ ໄດ້ສິ້ນສຸດລົງ;
3. ຄູ່ສັນຍາຝ່າຍໃດໜຶ່ງ ເສຍຊີວິດ ໂດຍບໍ່ມີຜູ້ສືບທອດ;
4. ຄູ່ສັນຍາ ໄດ້ມີການຕົກລົງກັນ;
5. ຄູ່ສັນຍາ ໄດ້ເຂົ້າຮ່ວມເປັນອັນດຽວກັນ;
6. ມີຄຳຕັດສິນຂອງສານ ໃຫ້ຍົກເລີກສັນຍາຮຸ້ນສ່ວນ;
7. ມີຂາຮຸ້ນໃດໜຶ່ງ ລົ້ມລະລາຍ ຫລື ຂາດຄວາມສາມາດທາງດ້ານການປະພຶດ ເວັ້ນເສັຍແຕ່ ໄດ້ຕົກລົງກັນໄວ້ຢ່າງອື່ນ ຫລື ມີການລົ້ມລະລາຍຂອງວິສາຫະກິດ.

**ມາດຕາ 82(ປັບປຸງ). ການແບ່ງປັນຜົນປະໂຫຍດ ຫລື ຄວາມຮັບຜິດຊອບຕໍ່ໜີ້ສິນ**

ເມື່ອສັນຍາຮຸ້ນສ່ວນ ຫາກໄດ້ສິ້ນສຸດລົງ ຖ້າບໍ່ມີການຕົກລົງຕ່າງຫາກຢູ່ໃນສັນຍາແລ້ວ ການແບ່ງປັນຜົນປະໂຫຍດ ຫລື ຄວາມຮັບຜິດຊອບຕໍ່ໜີ້ສິນ ໃຫ້ອີງຕາມຮຸ້ນຂອງແຕ່ລະຄົນ.

# ພາກທີ III

# ຂໍ້ຜູກພັນນອກສັນຍາ

## ໝວດທີ 1

## ຄວາມຮັບຜິດຊອບທີ່ເນື່ອງມາຈາກການກະທຳຂອງຕົນເອງ

**ມາດຕາ 83(ປັບປຸງ). ສາເຫດທີ່ພາໃຫ້ມີຄວາມຮັບຜິດຊອບ**

ບຸກຄົນໃດ ຫາກໄດ້ກໍ່ຄວາມເສັຍຫາຍໃຫ້ແກ່ຜູ້ອື່ນ ດ້ວຍການກະທຳຂອງຕົນເອງ ບຸກຄົນນັ້ນຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍທີ່ຕົນໄດ້ກໍ່ຂຶ້ນ ເວັ້ນເສັຍແຕ່ຄວາມເສັຍຫາຍທີ່ເກີດຂຶ້ນນັ້ນແມ່ນຍ້ອນ ການປ້ອງກັນຕົວ, ການປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ ຫລື ຍ້ອນຄວາມຜິດຂອງຜູ້ຖືກເສັຍຫາຍເອງ.

**ມາດຕາ 84(ປັບປຸງ). ລັກສະນະຂອງຄວາມເສັຍຫາຍ**

ຄວາມເສັຍຫາຍທີ່ເນື່ອງມາຈາກການກະທຳຂອງບຸກຄົນໃດໜຶ່ງ ຕ້ອງມີລັກສະນະແນ່ນອນຄື ໄດ້ເກີດຂຶ້ນແລ້ວ ຫລື ແນ່ນອນຈະເກີດຂຶ້ນໃນອະນາຄົດ.

ຄວາມເສັຍຫາຍ ທີ່ອາດຈະເກີດຂຶ້ນ ຫລື ບໍ່ເກີດຂຶ້ນໃນອະນາຄົດນັ້ນ ບໍ່ໃຫ້ຖືວ່າເປັນຄວາມເສັຍຫາຍທີ່ແນ່ນອນ.

**ມາດຕາ 85(ປັບປຸງ). ປະເພດຂອງຄວາມເສັຍຫາຍ**

ຄວາມເສັຍຫາຍ ມີ ສາມ ປະເພດ ດັ່ງນີ້ :

- ທາງດ້ານຊັບສິ່ງຂອງ;
- ທາງດ້ານຊີວິດ ຫລື ສຸຂະພາບ;
- ທາງດ້ານຈິດໃຈ.

**ມາດຕາ 86. ຄວາມຜິດ**

ຄວາມຜິດ ສະແດງອອກດ້ວຍການກະທຳ ຫລື ການເມີນເສີຍ ຊຶ່ງເປັນການລະເມີດລະບຽບກົດໝາຍ ແລະ ກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ ໂດຍເຈດຕະນາ ຫລື ດ້ວຍຄວາມບໍ່ລະມັດລະວັງ.

**ມາດຕາ 87. ສາຍພົວພັນລະຫວ່າງ ເຫດ ແລະ ຜົນເສັຍຫາຍ**

ບຸກຄົນໃດໜຶ່ງ ຈະມີຄວາມຮັບຜິດຊອບ ຕໍ່ການໃຊ້ແທນຄ່າເສັຍຫາຍໄດ້ນັ້ນ ກໍຕໍ່ເມື່ອຫາກມີສາຍພົວພັນເຫດ ແລະ ຜົນ ລະຫວ່າງການກະທຳທີ່ລະເມີດກົດໝາຍຂອງບຸກຄົນນັ້ນ ກັບຄວາມເສັຍຫາຍທີ່ເກີດຂຶ້ນ ຊຶ່ງປະກອບດ້ວຍ ສາມ ເງື່ອນໄຂ ດັ່ງນີ້:

- ເຫດ ແມ່ນສິ່ງຈຳເປັນ ທີ່ພາໃຫ້ເກີດຜົນເສັຍຫາຍ;
- ເຫດ ຕ້ອງເກີດຂຶ້ນກ່ອນຜົນເສັຍຫາຍ;
- ເຫດ ຕ້ອງເປັນສາເຫດໂດຍກົງຂອງຜົນເສັຍຫາຍ.

**ມາດຕາ 88. ຄວາມເສັຍຫາຍທີ່ເນື່ອງມາຈາກການນຳໃຊ້ສິດເກີນຄວນ**

ບຸກຄົນໃດ ຫາກໄດ້ນຳໃຊ້ສິດຂອງຕົນເກີນຄວນໂດຍເຈດຕະນາ ບຸກຄົນນັ້ນ ຕ້ອງຮັບຜິດຊອບ ໃຊ້ແທນຄ່າເສັຍຫາຍ ທີ່ເນື່ອງມາຈາກການໃຊ້ສິດເກີນຄວນນັ້ນ.

**ມາດຕາ 89. ຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເນື່ອງມາຈາກ ສະພາວະທີ່ຈຳເປັນ**

ຄວາມເສັຍຫາຍທີ່ເນື່ອງມາຈາກສະພາວະທີ່ຈຳເປັນ ຕ້ອງໄດ້ຮັບການໃຊ້ແທນ ແຕ່ອີງໃສ່ສະພາບການຕົວຈິງ ສານ ອາດພິຈາລະນາຕັດສິນໃຫ້ ຜູ້ກະທຳ ຫລື ບຸກຄົນທີສາມ ຊຶ່ງໄດ້ຮັບຜົນປະໂຫຍດຈາກການກະທຳຂອງຜູ້ກໍ່ຄວາມເສັຍຫາຍນັ້ນ ເປັນຜູ້ຮັບຜິດຊອບໃຊ້ແທນຄ່າເສັຍຫາຍ.

**ມາດຕາ 90. ຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ຫລາຍຄົນໄດ້ກໍ່ຂຶ້ນ**

ບັນດາບຸກຄົນ ຊຶ່ງໄດ້ຮ່ວມກັນກໍ່ຄວາມເສັຍຫາຍ ຕ້ອງຮັບຜິດຊອບຮ່ວມກັນ ໃນການໃຊ້ແທນຄ່າເສັຍຫາຍທີ່ພວກຕົນໄດ້ກໍ່ຂຶ້ນນັ້ນ. ສານ ອາດພິຈາລະນາຕັດສິນໃຫ້ບຸກຄົນໃດໜຶ່ງ ຫລື ຫລາຍຄົນ

ໃນຈຳນວນຜູ້ກໍ່ຄວາມເສຍຫາຍນັ້ນ ໃຊ້ແທນຄ່າເສຍຫາຍທັງຫມົດກໍໄດ້, ແຕ່ຜູ້ກ່ຽວ ມີສິດທວງເອົານຳ ບຸກຄົນ ທີ່ຕົນໄດ້ໃຊ້ຕາງໄປແລ້ວນັ້ນຄືນ.

**ມາດຕາ 91(ປັບປຸງ). ການຄິດໄລ່ການໃຊ້ແທນຄ່າເສຍຫາຍ ແລະ ຄ່າປ່ວຍການ**

ການຄິດໄລ່ການໃຊ້ແທນຄ່າເສຍຫາຍ ແລະ ຄ່າປ່ວຍການ ຕ້ອງໃຫ້ສອດຄ່ອງກັບຄວາມຜິດ ຂອງຜູ້ກໍ່ຄວາມເສຍຫາຍ.

ນອກຈາກຄ່າເສຍຫາຍແລ້ວ ຜູ້ກໍ່ຄວາມເສຍຫາຍ ອາດຈະຍັງຕ້ອງໄດ້ໃຊ້ແທນຄ່າປ່ວຍການ ນຳອີກ ເຊັ່ນ: ລາຍຮັບຊຶ່ງຜູ້ຖືກເສຍຫາຍຄວນຈະໄດ້, ຄ່າໃຊ້ຈ່າຍເພີ່ມຂອງຜູ້ຖືກເສຍຫາຍ ຊຶ່ງເນື່ອງ ມາຈາກການກະທຳຜິດ.

ໃນກໍລະນີທີ່ຜູ້ຖືກເສຍຫາຍ ຫາກມີຄວາມຜິດ ຜູ້ກ່ຽວກໍຕ້ອງມີສ່ວນຮັບຜິດຊອບຕໍ່ຄວາມເສຍ ຫາຍ ແລະ ຄ່າປ່ວຍການນັ້ນ ເຫມືອນກັນ.

## ຫມວດທີ 2
## ຄວາມຮັບຜິດຊອບ ທີ່ເນື່ອງມາຈາກການກະທຳ ຂອງບຸກຄົນອື່ນ, ຂອງສັດ, ວັດຖຸສິ່ງຂອງ ທີ່ຢູ່ໃນການຄຸ້ມຄອງຂອງຕົນ

**ມາດຕາ 92(ປັບປຸງ). ຄວາມຮັບຜິດຊອບຂອງຜູ້ໃຊ້ວຽກ**

ຜູ້ໃຊ້ວຽກ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ ທີ່ຜູ້ຮັບໃຊ້ວຽກຂອງຕົນ ໄດ້ກໍ່ຂຶ້ນ ໃຫ້ແກ່ ບຸກຄົນອື່ນ ໃນການປະຕິບັດຫນ້າທີ່ຕາມການມອບຫມາຍ.

ໃນກໍລະນີທີ່ຄວາມເສຍຫາຍ ຫາກເກີດຂຶ້ນຍ້ອນຄວາມຜິດອັນຫນັກຫນ່ວງຂອງຜູ້ຮັບໃຊ້ວຽກ ແລ້ວ ຜູ້ກ່ຽວ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ ແຕ່ຜູ້ໃຊ້ວຽກນັ້ນ ຕ້ອງໄດ້ຈ່າຍຄ່າເສຍຫາຍນັ້ນ ກ່ອນແລ້ວ ຈຶ່ງທວງເອົາການທົດແທນຄ່າເສຍຫາຍ ທີ່ໄດ້ຈ່າຍໄປແລ້ວນັ້ນຄືນ ຈາກຜູ້ຮັບໃຊ້ວຽກ.

ການຫາບຸກຄົນອື່ນໃຫ້ເຮັດວຽກ ເພື່ອຜົນປະໂຫຍດຂອງຕົນ ກໍໃຫ້ປະຕິບັດຕາມວັກທີຫນຶ່ງ ຂອງມາດຕານີ້.

**ມາດຕາ 93. ຄວາມຮັບຜິດຊອບຂອງພໍ່ແມ່, ຜູ້ປົກຄອງ ຫລື ຜູ້ຄຸ້ມຄອງ**

ພໍ່ແມ່, ຜູ້ປົກຄອງ ຫລື ຜູ້ຄຸ້ມຄອງ ເຊັ່ນ ໂຮງຮຽນອະນຸບານ, ໂຮງຫມໍ ແລະ ອື່ນໆ ເປັນຜູ້ຮັບ ຜິດຊອບຕໍ່ຄວາມເສຍຫາຍ ທີ່ເນື່ອງມາຈາກຄວາມຜິດຂອງເດັກ ທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫລື ຄົນບ້າເສຍຈິດ ທີ່ຢູ່ໃນການຄຸ້ມຄອງຂອງຕົນ.

**ມາດຕາ 94. ຄວາມຮັບຜິດຊອບຂອງຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງ ສັດ**

ເຈົ້າຂອງ ຫລື ຜູ້ຄອບຄອງ ສັດ ຕ້ອງຮັບຜິດຊອບຕໍ່ຄວາມເສັຍຫາຍ ທີ່ສັດນັ້ນໄດ້ກໍ່ຂຶ້ນ ຍ້ອນຄວາມຜິດຂອງເຈົ້າຂອງ ຫລື ຜູ້ຄອບຄອງ ສັດນັ້ນ.

**ມາດຕາ 95. ຄວາມຮັບຜິດຊອບ ຕໍ່ຄວາມເສັຍຫາຍທີ່ເກີດຂຶ້ນຈາກວັດຖຸສິ່ງຂອງ**

ຄວາມເສັຍຫາຍທີ່ເກີດຂຶ້ນຈາກວັດຖຸສິ່ງຂອງໃດໜຶ່ງ ຍ້ອນຄວາມຜິດຂອງຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງນັ້ນ ຜູ້ກ່ຽວ ຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍດັ່ງກ່າວ.

## ໝວດທີ 3
## ການເຮັດວຽກງານແທນຜູ້ອື່ນ

**ມາດຕາ 96. ການເຮັດວຽກງານແທນຜູ້ອື່ນ**

ການເຮັດວຽກງານແທນຜູ້ອື່ນ ແມ່ນ ການທີ່ຜູ້ເຮັດວຽກງານແທນ ໄດ້ດຳເນີນວຽກງານໃດໜຶ່ງ ເພື່ອຜົນປະໂຫຍດຂອງບຸກຄົນອື່ນ ໂດຍບໍ່ໄດ້ຮັບການມອບໝາຍຈາກບຸກຄົນນັ້ນ ເຊັ່ນ: ການສ້ອມແປງເຮືອນໃຫ້ຜູ້ອື່ນ ໃນເວລາຜູ້ນີ້ ຫາກບໍ່ຢູ່ ແລະ ອື່ນໆ.

**ມາດຕາ 97. ເງື່ອນໄຂຂອງການເຮັດວຽກງານແທນຜູ້ອື່ນ**

ການເຄື່ອນໄຫວຂອງຜູ້ເຮັດວຽກງານແທນຜູ້ອື່ນ ຕ້ອງດຳເນີນໄປດ້ວຍເຈດຕະນາດີ ແລະ ມີຜົນປະໂຫຍດໃຫ້ແກ່ຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງ. ໃນກໍລະນີທີ່ຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງ ຫາກຍັງຢູ່ກັບທີ່ນັ້ນ ການເຮັດວຽກງານແທນຈະດຳເນີນໄດ້ ກໍຕໍ່ເມື່ອຫາກໄດ້ຮັບຄວາມເຫັນດີຈາກຜູ້ກ່ຽວ ເສັຍກ່ອນ.

ເປົ້າໝາຍຂອງການເຮັດວຽກງານແທນຜູ້ອື່ນ ອາດຈະແມ່ນການເຄື່ອນໄຫວທາງດ້ານກົດໝາຍ ເຊັ່ນ ການໃຊ້ໜີ້ສິນແທນ ຫລື ການເຄື່ອນໄຫວທາງດ້ານວັດຖຸ ເຊັ່ນ ການສ້ອມແປງເຮືອນແທນ.

**ມາດຕາ 98. ຜົນຂອງການເຮັດວຽກງານແທນຜູ້ອື່ນ**

ຜູ້ເຮັດວຽກງານແທນຜູ້ອື່ນ ມີພັນທະດັ່ງດຽວກັນກັບຜູ້ຮັບມອບໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 69 ຂອງກົດໝາຍສະບັບນີ້. ຜູ້ເຮັດວຽກງານແທນ ຕ້ອງຮັບຜິດຊອບຕໍ່ທຸກຄວາມເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ ແລະ ຕ້ອງແຈ້ງກ່ຽວກັບການເຮັດວຽກຂອງຕົນ ໃຫ້ຜູ້ເປັນເຈົ້າຂອງ ຫລື ຜູ້

ຄອບຄອງຊາບ. ຜູ້ເຮັດວຽກງານແທນ ຕ້ອງສືບຕໍ່ວຽກງານທີ່ໄດ້ເລີ່ມມາແລ້ວນັ້ນ ໃຫ້ສຳເລັດ ຫລື ຈົນກວ່າຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງ ຈະມີຄວາມສາມາດດຳເນີນເອງໄດ້.

ຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງ ມີພັນທະດັ່ງດຽວກັນກັບຜູ້ມອບຫມາຍ ໃນການທົດແທນຄ່າໃຊ້ຈ່າຍຕ່າງໆ ທີ່ຈຳເປັນ ແລະ ມີຜົນປະໂຫຍດ ຖ້າວ່າການເຮັດວຽກງານແທນນັ້ນ ຫາກໄດ້ດຳເນີນໄປດ້ວຍດີ ຫລື ໃນກໍລະນີໃດກໍຕາມ ຖ້າຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງ ຫາກໄດ້ເຫັນດີຮັບຮອງເອົາການເຮັດວຽກງານແທນນັ້ນ.

## ຫມວດທີ 4
## ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ

**ມາດຕາ 99. ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດໂດຍເຈດຕະນາ**

ບຸກຄົນໃດ ຫາກໄດ້ຮັບຊັບສິ່ງຂອງ ຂອງຜູ້ອື່ນໂດຍເຈດຕະນາ ທັງໆທີ່ຮູ້ວ່າຕົນບໍ່ມີສິດຮັບຊັບສິ່ງຂອງນັ້ນແລ້ວ ບຸກຄົນນັ້ນ ຕ້ອງສົ່ງຊັບສິ່ງຂອງ ຫລື ມູນຄ່າຂອງຊັບສິ່ງຂອງນັ້ນ ຄືນໃຫ້ຜູ້ເປັນເຈົ້າຂອງ ພ້ອມທັງຫມາກຜົນ ຫລື ລາຍໄດ້ ນັບແຕ່ວັນໄດ້ຮັບເປັນຕົ້ນໄປ.

**ມາດຕາ 100. ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດດ້ວຍຄວາມຫລົງຜິດ**

ບຸກຄົນໃດ ຫາກໄດ້ຮັບຊັບສິ່ງຂອງ ຂອງຜູ້ອື່ນດ້ວຍຄວາມຫລົງຜິດ ບຸກຄົນນັ້ນ ຕ້ອງສົ່ງຊັບສິ່ງຂອງ ຫລື ມູນຄ່າຂອງຊັບສິ່ງຂອງນັ້ນ ຄືນໃຫ້ຜູ້ເປັນເຈົ້າຂອງ. ຜູ້ເປັນເຈົ້າຂອງຊັບນັ້ນ ຕ້ອງທົດແທນຄ່າໃຊ້ຈ່າຍໃນການປົກປັກຮັກສາຊັບສິ່ງຂອງໃຫ້ແກ່ຜູ້ຮັບຊັບນັ້ນ.

# ພາກທີ IV
# ການແກ້ໄຂຂໍ້ຂັດແຍ່ງ ແລະ ອາຍຸຄວາມໃນການຮ້ອງຟ້ອງ

**ມາດຕາ 101(ປັບປຸງ). ວິທີແກ້ໄຂຂໍ້ຂັດແຍ່ງ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບການປະຕິບັດສັນຍາ ແລະ ການຮ້ອງຂໍເອົາການໃຊ້ແທນຄ່າເສັຍຫາຍ ຄູ່ກໍລະນີ ອາດຈະຊອກວິທີແກ້ໄຂຂໍ້ຂັດແຍ່ງດ້ວຍຕົນເອງ ຫລື ປະນີປະນອມກັນ. ຖ້າວ່າຄູ່ກໍລະນີ ຫາກບໍ່ສາມາດຕົກລົງກັນໄດ້ ກໍມີສິດສະເຫນີຕໍ່ຫນ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຫລື ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫລື ຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາແກ້ໄຂ ຕາມລະບຽບກົດຫມາຍ.

ມາດຕາ 102(ປັບປຸງ). **ອາຍຸຄວາມໃນການຮ້ອງຟ້ອງ**

ອາຍຸຄວາມໃນການຮ້ອງຟ້ອງ ມີກຳນົດ ສິບ ປີ ສຳລັບສັນຍາກ່ຽວກັບສິ່ງກໍ່ສ້າງ ແລະ ສາມ ປີ ສຳລັບສັນຍາປະເພດອື່ນ ແລະ ການຮ້ອງຂໍເອົາການໃຊ້ແທນຄ່າເສັຍຫາຍ ເວັ້ນເສັຍແຕ່ກົດໝາຍ ຫາກ ໄດ້ກຳນົດໄວ້ຢ່າງອື່ນ.

ອາຍຸຄວາມໃນການຮ້ອງຟ້ອງ ໃຫ້ເລີ່ມນັບແຕ່ວັນກຳນົດເວລາຂອງສັນຍານັ້ນໄດ້ສິ້ນສຸດ ຫລື ນັບແຕ່ວັນ ທີ່ຄວາມເສັຍຫາຍໄດ້ເກີດຂຶ້ນ ເປັນຕົ້ນໄປ.

ອາຍຸຄວາມໃນການຮ້ອງຟ້ອງ ຈະຖືກໂຈະ ໃນກໍລະນີ ທີ່ມີເຫດສຸດວິໄສ ຫລື ເຫດບັງເອີນ ຊຶ່ງເປັນອຸປະສັກ ຕໍ່ການຍື່ນຄຳຮ້ອງຟ້ອງ.

ພາຍຫລັງທີ່ໄລຍະເວລາຂອງການໂຈະນັ້ນ ໄດ້ສິ້ນສຸດແລ້ວ ອາຍຸຄວາມທີ່ໄດ້ຜ່ານມາກ່ອນ ນັ້ນ ກໍຈະສືບຕໍ່ອີກ.

ອາຍຸຄວາມໃນການຮ້ອງຟ້ອງ ຈະຖືກຢຸດຊະງັກ ເມື່ອມີການກະທຳອັນແນ່ນອນຂອງຄູ່ຄວາມ ຫລື ຄູ່ສັນຍາ ເຊັ່ນ: ການຮັບຮູ້ໜີ້ສິນຂອງຕົນ. ໃນກໍລະນີນີ້ ອາຍຸຄວາມໃນການຮ້ອງຟ້ອງ ໃຫ້ເລີ່ມນັບ ຄືນໃໝ່.

## ພາກທີ V (ໃໝ່)
## ຂໍ້ຫ້າມ

ມາດຕາ 103(ໃໝ່). **ຂໍ້ຫ້າມສຳລັບບຸກຄົນ ແລະ ນິຕິບຸກຄົນ**

ຫ້າມ ບຸກຄົນ ແລະ ນິຕິບຸກຄົນ ມີການກະທຳຕົ້ນຕໍ ດັ່ງນີ້:

- ປ່ຽນແປງ ຫລື ຍົກເລີກສັນຍາແຕ່ຝ່າຍດຽວ;
- ປອມແປງເອກະສານ ຫລື ສັນຍາ;
- ຊື້ຂາຍຊັບສິນທຸກປະເພດຂອງລັດ ຫລື ຂອງສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດ;
- ໃຫ້ສິນບົນແກ່ເຈົ້າໜ້າທີ່ຂອງລັດ;
- ເຮັດສັນຍາເກີນສິດອຳນາດ ທີ່ມອບໝາຍໃຫ້;
- ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ;
- ຕົວະຍົວະ ຫລອກລວງ ຫລື ບັງຄັບນາບຂູ່ ໃຫ້ເຮັດສັນຍາ;
- ຊັກຊວນເດັກ, ຄົນບ້າເສັຍຈິດ ຫລື ຄົນຢູ່ໃນສະພາບມຶນເມົາ ອັນໜັກໜ່ວງ ຫລື ຂາດສະຕິ ເຮັດສັນຍາ;
- ປ່ອຍປະລະເລີຍ ແລະ ຂາດຄວາມຮັບຜິດຊອບຕໍ່ບຸກຄົນອື່ນ, ສັດ ແລະ ວັດຖຸສິ່ງ ຂອງ ທີ່ຢູ່ໃນການຄຸ້ມຄອງຂອງຕົນ;

- ເຮັດວຽກງານແທນຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ໃນກໍລະນີທີ່ຜູ້ເປັນເຈົ້າຂອງຢູ່ໃນສະຖານທີ່ ທີ່ສາມາດຕິດຕໍ່ໄດ້.

ມາດຕາ 104(ໃຫມ່). **ຂໍ້ຫ້າມສໍາລັບເຈົ້າຫນ້າທີ່ ທີ່ກ່ຽວຂ້ອງຂອງລັດ**

ຫ້າມ ເຈົ້າຫນ້າທີ່ ທີ່ກ່ຽວຂ້ອງຂອງລັດ ມີ ການກະທໍາຕົ້ນຕໍ ດັ່ງນີ້:

- ສວຍໃຊ້ຕໍາແຫນ່ງຫນ້າທີ່ ເພື່ອຜົນປະໂຫຍດຂອງຕົນ, ຄອບຄົວ ຫລື ພັກພວກ;
- ຮັບສິນບົນ;
- ເຊັນຢັ້ງຢືນເອກະສານ ຫລື ສັນຍາ ໂດຍບໍ່ມີການຄົ້ນຄວ້າ ຫລື ກວດກາ ຢ່າງຄັກແນ່;
- ປອມແປງເອກະສານ;
- ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ.

## ພາກທີ VI (ໃຫມ່)
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 105(ໃຫມ່). **ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດຫມາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 106 (ໃຫມ່). **ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ລະເມີດກົດຫມາຍສະບັບນີ້ ເປັນຕົ້ນ ການບໍ່ປະຕິບັດສັນຍາ ຫລື ມີການລະເມີດໃດຫນຶ່ງ ທີ່ກໍ່ໃຫ້ເກີດຄວາມເສັຍຫາຍແກ່ ລັດ, ສັງຄົມ ຫລື ບຸກຄົນອື່ນ ຈະຖືກປະຕິບັດມາດຕະການຕ່າງໆທີ່ເຫມາະສົມ ຫລື ອາດຖືກດໍາເນີນຄະດີຕາມກົດຫມາຍ ຕາມກໍລະນີເບົາ ຫລື ຫນັກ.

## ພາກທີ VII (ໃຫມ່)
## ບົດບັນຍັດສຸດທ້າຍ

ມາດຕາ 107(ໃຫມ່). **ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດຫມາຍສະບັບນີ້.

ມາດຕາ 108(ໃຫມ່). **ຜົນສັກສິດ**

ກົດຫມາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ກົດຫມາຍສະບັບນີ້ ປ່ຽນແທນກົດຫມາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ສະບັບເລກທີ 02/90/ສປສ ລົງວັນທີ 27 ມິຖຸນາ 1990 ແລະ ກົດຫມາຍວ່າດ້ວຍຂໍ້ຜູກພັນນອກສັນຍາ ສະບັບເລກທີ 08/90/ສປສ ລົງວັນທີ 29 ພະຈິກ 1990.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດຫມາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ